**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ລັດຖະບານ ເລກທີ /ລບ

ນະຄອນຫຼວງວຽງຈັນ, ວັນທີ

# (ຮ່າງ) ດຳລັດ

## ວ່າດ້ວຍການເຄື່ອນໄຫວວຽກງານສື່ມວນຊົນ ຢູ່ ສປປ ລາວ ຂອງສື່ມວນຊົນ, ສຳນັກງານຜູ້ຕາງໜ້າ ແລະ ອົງການຈັດຕັ້ງ ຕ່າງປະເທດ

(ປັບປຸງຊື່ດຳລັດ)

- ອີງຕາມ ກົດໝາຍ ວ່າດ້ວຍລັດຖະບານ ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ກົດໝາຍ ວ່າດ້ວຍສຳນັກງານຜູ້ຕາງໜ້າ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ປະຈຳຢູ່ຕ່າງປະເທດ ສະບັບເລກທີ 58/ສພຊ, ລົງວັນທີ 11 ທັນວາ 2018;
- ອີງຕາມ ກົດໝາຍ ວ່າດ້ວຍສື່ມວນຊົນ ສະບັບເລກທີ 01/ສພຊ, ລົງວັນທີ 04 ພະຈິກ 2016;
- ອີງຕາມ ກົດໝາຍ ວ່າດ້ວຍການເຂົ້າ-ອອກ ແລະ ຄຸ້ມຄອງຄົນຕ່າງປະເທດ ສະບັບເລກທີ 59/ສພຊ, ລົງວັນທີ 26 ທັນວາ 2014.
- ອີງຕາມການສະເໜີຂອງກະຊວງການຕ່າງປະເທດ ສະບັບເລກທີ.............,ລົງວັນທີ...........2026.

## ລັດຖະບານ ອອກດຳລັດ:

## ພາກທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 (ປັບປຸງ) ຈຸດປະສົງ**

ດຳລັດສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ, ຕິດຕາມ ກວດກາ ການເຄື່ອນໄຫວວຽກງານສື່ມວນຊົນ ຂອງສື່ມວນຊົນ, ສຳນັກງານຜູ້ຕາງໜ້າ ແລະ ອົງການຈັດຕັ້ງ ຕ່າງປະເທດ ຢູ່ ສປປ ລາວ ເພື່ອອຳນວຍຄວາມສະດວກໃຫ້ແກ່ສຳນັກງານ ແລະ ອົງການເຫຼົ່ານັ້ນ ເຄື່ອນໄຫວ

ຖືກຕ້ອງ ຕາມກົດໝາຍ ແນໃສ່ສົ່ງເສີມການແລກປ່ຽນ ແລະ ເຜີຍແຜ່ ຂໍ້ມູນ ຂ່າວສານ ເຊິ່ງ ກັນ ແລະ ກັນ ລະຫວ່າງ ສປປ ລາວ ແລະ ຕ່າງປະເທດ ໃຫ້ນັບມື້ນັບກວ້າງຂວາງ ປະກອບສ່ວນເຂົ້າໃນ ການປົກປັກຮັກສາ ແລະ ສ້າງສາປະເທດຊາດ.

**ມາດຕາ 2 (ປັບປຸງ) ການເຄື່ອນໄຫວວຽກງານສື່ມວນຊົນ ຢູ່ ສປປ ລາວ ຂອງສື່ມວນຊົນ, ສຳນັກງານຜູ້ຕາງໜ້າ ແລະ ອົງການຈັດຕັ້ງ ຕ່າງປະເທດ**

ການເຄື່ອນໄຫວວຽກງານສື່ມວນຊົນ ຢູ່ ສປປ ລາວ ຂອງສື່ມວນຊົນຕ່າງປະເທດ ແມ່ນ ການເກັບກຳ ຂໍ້ມູນ ຂ່າວສານ, ເອກະສານ, ຮູບພາບ, ການບັນທຶກ ພາບ ແລະ ສຽງ, ການຖ່າຍຮູບ, ການຖ່າຍຮູບເງົາ, ການພິມປະ, ການສຳພາດ, ການລົງເຄື່ອນໄຫວຢູ່ສະຖານທີ່ຕ່າງໆ ແລະ ການເຄື່ອນໄຫວອື່ນ ເພື່ອຂຽນເປັນ ຂ່າວ, ບົດ, ວາລະສານ ຫຼື ຜະລິດ ລາຍການ, ສາລະຄະດີ ແລະ ຜະລິດຕະພັນສື່ມວນຊົນອື່ນ ກ່ຽວກັບ ສປປ ລາວ.

ການເຄື່ອນໄຫວວຽກງານສື່ມວນຊົນ ຢູ່ ສປປ ລາວ ຂອງ ສຳນັກງານຜູ້ຕາງໜ້າ ແລະ ອົງການຈັດຕັ້ງຕ່າງປະເທດ ແມ່ນ ການພິມ ແລະ ຈຳໜ່າຍ ສິ່ງພິມຂອງຕ່າງປະເທດ ເປັນຕົ້ນ ໃບຂ່າວສານ, ຈົດໝາຍເຫດ, ວາລະສານ, ບົດຖະແຫຼງຂ່າວ, ເອກະສານ, ປຶ້ມ, ໃບປິວ, ແຜ່ນພັບ, ແຜນທີ່, ປະຕິທິນ, ຮູບແຕ້ມ, ຮູບພາບ, ແຜ່ນສຽງ, ກະແຊັດ, ຊີດີ, ວີຊີດີ, ດີວີດີ ແລະ ສິ່ງພິມອື່ນ ຢູ່ ສປປ ລາວ; ການຈັດກອງປະຊຸມຖະແຫຼງຂ່າວ; ການລົງ ຂ່າວ, ບົດ ແລະ ຄຳປາໄສ ໃນສື່ມວນຊົນລາວ; ການວາງສະແດງ ຮູບແຕ້ມ, ຮູບພາບ ແລະ ຂໍ້ມູນ ຂ່າວສານຮູບແບບອື່ນ; ການຕິດຕັ້ງ ກະດານ, ປ້າຍ ທຸກປະເພດ ທຸກຊະນິດ ຂອງສຳນັກງານຜູ້ຕາງໜ້າ ແລະ ອົງການຈັດຕັ້ງຕ່າງປະເທດ ຢູ່ ນອກເຂດສະຖານທີ່ເຮັດວຽກຂອງຕົນ ລວມທັງການຈັດ ງານສາຍຮູບເງົາ, ງານວາງສະແດງ ແລະ ງານໂຄສະນາ ເຜີຍແຜ່ອື່ນ ທີ່ພົນລະເມືອງລາວເຂົ້າຮ່ວມ.

**ມາດຕາ 3 (ໃໝ່) ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ສື່ມວນຊົນຕ່າງປະເທດ** ໝາຍເຖິງ ສຳນັກງານ ຂ່າວສານ, ວິທະຍຸ, ໂທລະພາບ, ໜັງສືພິມ, ໜັງສືພິມເອເລັກໂຕຣນິກ ແລະ ສື່ມວນຊົນອື່ນ ຂອງຕ່າງປະເທດ;

2. **ຫ້ອງການຜູ້ຕາງໜ້າສື່ມວນຊົນຕ່າງປະເທດ** ໝາຍເຖິງ ຫ້ອງການສາຂາ ທີ່ໄດ້ຮັບການສ້າງຕັ້ງ ໂດຍສື່ມວນຊົນຕ່າງປະເທດ ເພື່ອເຄື່ອນໄຫວວຽກງານສື່ມວນຊົນ ຢູ່ ສປປ ລາວ;

3. **ນັກຂ່າວຕ່າງປະເທດ** ໝາຍເຖິງ ນັກຂ່າວ ຫຼື ບັນນາທິການ ຂອງສື່ມວນຊົນຕ່າງປະເທດ;

4. **ນັກຂ່າວຕ່າງປະເທດທີ່ປະຈຳການ** ໝາຍເຖິງ ນັກຂ່າວຕ່າງປະເທດທີ່ໄດ້ຮັບການແຕ່ງຕັ້ງ ໂດຍສື່ມວນຊົນຕ່າງປະເທດ ໃຫ້ມາປະຈຳການ ຢູ່ ຫ້ອງການຜູ້ຕາງໜ້າຂອງຕົນ ຢູ່ ສປປ ລາວ;

5. **ບັດນັກຂ່າວຕ່າງປະເທດ** ໝາຍເຖິງ ໜັງສືຢັ້ງຢືນສະຖານະພາບຂອງນັກຂ່າວຕ່າງປະເທດທີ່ປະຈຳການ ຊຶ່ງອອກໂດຍກະຊວງການຕ່າງປະເທດ;

6. **ນັກຂ່າວຕ່າງປະເທດທີ່ບໍ່ປະຈຳການ** ໝາຍເຖິງ ນັກຂ່າວຕ່າງປະເທດທີ່ເດີນທາງເຂົ້າມາເຄື່ອນໄຫວວຽກງານສື່ມວນຊົນ ໃນໄລຍະສັ້ນ ຢູ່ ສປປ ລາວ;

7. **ໜັງສືອະນຸຍາດສື່ມວນຊົນຕ່າງປະເທດ (Foreign Press Card)** ໝາຍເຖິງ ໜັງສືອະນຸຍາດໃຫ້ນັກຂ່າວຕ່າງປະເທດທີ່ບໍ່ປະຈຳການ ເຄື່ອນໄຫວວຽກງານສື່ມວນຊົນ ຢູ່ ສປປ ລາວ ຕາມການແຜນການທີ່ໄດ້ກຳ

ນິດໄວ້ ລວມທັງນັກຂ່າວຕ່າງປະເທດ ທີ່ຕິດຕາມຄະນະຜູ້ແທນຂັ້ນສູງຂອງຕ່າງປະເທດ ຢ້ຽມຢາມ ສປປ ລາວ ຕາມການເຊື້ອເຊີນຂອງການນໍາພັກ-ລັດ ຫຼື ກະຊວງການຕ່າງປະເທດ ທີ່ມີຈຸດປະສົງເຄື່ອນໄຫວນອກແຜນການ ກໍຄືນັກຂ່າວຕ່າງປະເທດ ທີ່ຕິດຕາມຄະນະຜູ້ແທນຕ່າງປະເທດ ຢ້ຽມຢາມ ສປປ ລາວ ຕາມການເຊື້ອເຊີນຂອງການນໍາກະຊວງ, ອົງການ, ຄະນະກໍາມະການປົກຄອງທ້ອງຖິ່ນຂັ້ນແຂວງ ແລະ ພາກສ່ວນທີ່ກ່ຽວຂ້ອງ ຊຶ່ງອອກໃຫ້ໂດຍກະຊວງການຕ່າງປະເທດ;

8. **ຜູ້ຊ່ວຍວຽກສື່ມວນຊົນ** ໝາຍເຖິງ ພົນລະເມືອງລາວ ທີ່ເຮັດວຽກ ຕາມສັນຍາແຮງງານ ຢູ່ ຫ້ອງການຜູ້ຕາງໜ້າສື່ມວນຊົນຕ່າງປະເທດ ເພື່ອຊ່ວຍຫ້ອງການດັ່ງກ່າວ ໃນການເຄື່ອນໄຫວວຽກງານສື່ມວນຊົນ;

9. **ຜູ້ຮ່ວມງານ** ໝາຍເຖິງ ພົນລະເມືອງລາວ ຫຼື ຄົນຕ່າງປະເທດ ທີ່ອາໄສ ແລະ ເຮັດວຽກຢ່າງຖືກຕ້ອງຕາມກົດໝາຍ ຢູ່ ສປປ ລາວ ຊຶ່ງຖືກຮັບສະໝັກງານ ໂດຍຫ້ອງການຜູ້ຕາງໜ້າສື່ມວນຊົນຕ່າງປະເທດ ເພື່ອສະໜັບສະໜູນການເຄື່ອນໄຫວວຽກງານສື່ມວນຊົນ ສະເພາະໃດໜຶ່ງ ໃນໄລຍະເວລາໃດໜຶ່ງ;

10. **ສໍານັກງານຜູ້ຕາງໜ້າ ແຫ່ງ ສປປ ລາວ** ໝາຍເຖິງ ສະຖານເອກອັກຄະລັດຖະທູດ, ສະຖານກົງສຸນໃຫຍ່ ແລະ ຫ້ອງການກົງສຸນ ແຫ່ງ ສປປ ລາວ ປະຈໍາ ຢູ່ ຕ່າງປະເທດ;

11. **ສໍານັກງານຜູ້ຕາງໜ້າຕ່າງປະເທດ** ໝາຍເຖິງ ສໍານັກງານຜູ້ຕາງໜ້າການທູດຂອງຕ່າງປະເທດ ຫຼື ສໍານັກງານຜູ້ຕາງໜ້າກົງສຸນຂອງຕ່າງປະເທດ ແລະ ຫ້ອງການຜູ້ຕາງໜ້າອົງການຈັດຕັ້ງສາກົນ ປະຈໍາ ຢູ່ ສປປ ລາວ;

12. **ອົງການຈັດຕັ້ງຕ່າງປະເທດ** ໝາຍເຖິງ ຫ້ອງການຜູ້ຕາງໜ້າຂອງອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ, ອົງການຈັດຕັ້ງດ້ານ ເສດຖະກິດ, ວັດທະນະທໍາ, ວິທະຍາສາດ, ອົງການຈັດຕັ້ງທີ່ປຶກສາ, ບໍລິສັດ ແລະ ວິສາຫະກິດ ຂອງຕ່າງປະເທດ ຢູ່ ສປປ ລາວ;

13. **ກອງປະຊຸມຖະແຫຼງຂ່າວ** ໝາຍເຖິງ ກອງປະຊຸມ ຫຼື ການພົບປະໃດໜຶ່ງ ຊຶ່ງສໍານັກງານຜູ້ຕາງໜ້າຕ່າງປະເທດ, ອົງການຈັດຕັ້ງຕ່າງປະເທດ ຫຼື ຄະນະຜູ້ແທນຕ່າງປະເທດ ທີ່ ມາຢ້ຽມຢາມ ແລະ ຈັດຂຶ້ນ ຢູ່ ສປປ ລາວ ໂດຍເຊີນຜູ້ຕາງໜ້າສື່ມວນຊົນ ແລະ ພົນລະເມືອງລາວ ເຂົ້າຮ່ວມ ເພື່ອແຈ້ງຂ່າວ, ຖະແຫຼງຂ່າວ ແລະ ອອກຖະແຫຼງການ ຫຼື ອະທິບາຍຊີ້ແຈງ ກ່ຽວກັບບັນຫາໃດໜຶ່ງ ໃນຂອບເຂດສິດ, ໜ້າທີ່ ແລະ ກ່ຽວຂ້ອງກັບຜົນປະໂຫຍດຂອງຕົນ;

14. **ການນໍາຂັ້ນສູງຂອງພັກ-ລັດ** ໝາຍເຖິງ ເລຂາທິການໃຫຍ່, ປະທານປະເທດ, ນາຍົກລັດຖະມົນຕີ ແລະ ປະທານສະພາແຫ່ງຊາດ.

15. **ການນໍາພັກ-ລັດ** ໝາຍເຖິງ ການນໍາຂັ້ນສູງຂອງພັກ-ລັດ, ກໍາມະການກົມການເມືອງສູນກາງພັກ, ຄະນະເລຂາທິການສູນກາງພັກ, ຮອງປະທານປະເທດ, ຮອງນາຍົກລັດຖະມົນຕີ ແລະ ຮອງປະທານສະພາແຫ່ງຊາດ.

**ມາດຕາ 4 (ໃໝ່) ນະໂຍບາຍຂອງລັດ ກ່ຽວກັບການເຄື່ອນໄຫວວຽກງານສື່ມວນຊົນ ຢູ່ ສປປ ລາວ ຂອງສື່ມວນຊົນ, ສໍານັກງານຜູ້ຕາງໜ້າ ແລະ ອົງການຈັດຕັ້ງ ຕ່າງປະເທດ**

ສປປ ລາວ ປະຕິບັດນະໂຍບາຍການຕ່າງປະເທດ ສັນຕິພາບ, ເອກະລາດ, ມິດຕະພາບ ແລະ ການຮ່ວມມື; ຂະຫຍາຍ ສາຍພົວພັນມິດຕະພາບ ແລະ ການຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ໃນຂົງເຂດວຽກງານສື່ມວນຊົນ.

ລັດ ປົກປ້ອງ ສິດ ແລະ ຜົນປະໂຫຍດອັນຊອບທໍາ ຂອງສື່ມວນຊົນ, ສໍານັກງານຜູ້ຕາງໜ້າ, ອົງການຈັດຕັ້ງ ແລະ ນັກຂ່າວ ຕ່າງປະເທດ ໃນການເຄື່ອນໄຫວວຽກງານສື່ມວນຊົນ ຢູ່ ສປປ ລາວ.

ລັດ ສົ່ງເສີມ ແລະ ອຳນວຍຄວາມສະດວກ ໃຫ້ບຸກຄົນ ແລະ ອົງການຈັດຕັ້ງເຫຼົ່ານັ້ນ ເຄື່ອນໄຫວວຽກງານສື່ມວນຊົນ ຢູ່ ສປປ ລາວ ຕາມກົດໝາຍຂອງ ສປປ ລາວ.

**ມາດຕາ 5 (ໃໝ່) ຫຼັກການ ກ່ຽວກັບການເຄື່ອນໄຫວວຽກງານສື່ມວນຊົນ ຢູ່ ສປປ ລາວ ຂອງສື່ມວນຊົນ, ສຳນັກງານຜູ້ຕາງໜ້າ ແລະ ອົງການຈັດຕັ້ງ ຕ່າງປະເທດ**

ການເຄື່ອນໄຫວວຽກງານສື່ມວນຊົນ ຢູ່ ສປປ ລາວ ຂອງສື່ມວນຊົນ, ສຳນັກງານຜູ້ຕາງໜ້າ ແລະ ອົງການຈັດຕັ້ງ ຕ່າງປະເທດ ໃຫ້ປະຕິບັດ ຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບ ນະໂຍບາຍ, ກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ, ກົດໝາຍສາກົນ, ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ;

2. ຄຸ້ມຄອງ ຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ;

3. ເຄົາລົບ ເອກະລາດ, ອະທິປະໄຕ ແລະ ພື້ນແຜ່ນດິນອັນຄົບຖ້ວນຂອງກັນ, ບໍ່ແຊກແຊງເຂົ້າວຽກງານພາຍໃນຂອງກັນ, ສະເໝີພາບ, ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ ແລະ ຫຼັກການພື້ນຖານອື່ນຂອງກົດໝາຍສາກົນ;

4. ເຄົາລົບ ແລະ ປະຕິບັດ ຕາມຈັນຍາບັນວິຊາຊີບຂອງນັກຂ່າວ;

5. ທຸກການເຄື່ອນໄຫວ ວຽກງານສື່ມວນຊົນ ຢູ່ ສປປ ລາວ ຂອງສື່ມວນຊົນ, ສຳນັກງານຜູ້ຕາງໜ້າ ແລະ ອົງການຈັດຕັ້ງ ຕ່າງປະເທດ ຕ້ອງໄດ້ຮັບອະນຸຍາດຈາກພາກສ່ວນທີ່ກ່ຽວຂ້ອງຂອງ ສປປ ລາວ ຕາມທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້.

**ມາດຕາ 6 (ປັບປຸງ) ຂອບເຂດການນຳໃຊ້**

ດຳລັດສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງ ພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວ ແລະ ພົວພັນກັບວຽກງານວຽກງານສື່ມວນຊົນ ຢູ່ ສປປ ລາວ ຂອງສື່ມວນຊົນ, ສຳນັກງານຜູ້ຕາງໜ້າ ແລະ ອົງການຈັດຕັ້ງ ຕ່າງປະເທດ.

**ມາດຕາ 7 (ປັບປຸງ) ການຮ່ວມມືສາກົນ**

ລັດ ສົ່ງເສີມ ການພົວພັນຮ່ວມມືກັບ ຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານວຽກງານສື່ມວນຊົນ ຂອງສື່ມວນຊົນ, ສຳນັກງານຜູ້ຕາງໜ້າ ແລະ ອົງການຈັດຕັ້ງ ຕ່າງປະເທດ ດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນ ຂ່າວສານ, ວິທະຍາສາດ, ເຕັກໂນໂລຊີ ແລະ ການພັດທະນາຊັບພະຍາກອນມະນຸດ, ປະຕິບັດ ກົດໝາຍສາກົນ, ສົນທິສັນຍາທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ.

## ພາກທີ 2
## ການເຄື່ອນໄຫວວຽກງານສື່ມວນຊົນຂອງສື່ມວນຊົນຕ່າງປະເທດ

## ໝວດທີ 1
## ນັກຂ່າວຕ່າງປະເທດທີ່ບໍ່ປະຈຳການ

**ມາດຕາ 8 (ປັບປຸງ) ການຂໍອະນຸຍາດເຄື່ອນໄຫວວຽກງານສື່ມວນຊົນຂອງນັກຂ່າວຕ່າງປະເທດທີ່ບໍ່ປະຈຳການ**

ນັກຂ່າວຕ່າງປະເທດທີ່ບໍ່ປະຈຳການ ຊຶ່ງມີຈຸດປະສົງເຂົ້າມາເຄື່ອນໄຫວວຽກງານສື່ມວນຊົນ ຢູ່ ສປປ ລາວ ຕ້ອງຍື່ນຄຳຮ້ອງຂໍອະນຸຍາດ ຕໍ່ກະຊວງການຕ່າງປະເທດ ຫຼື ສຳນັກງານຜູ້ຕາງໜ້າ ແຫ່ງ ສປປ ລາວ ໂດຍກົງ ຫຼື ຜ່ານທາງ ອີເມວ, ໄປສະນີ ຫຼື ໂທລະສານ ສິບ ວັນລັດຖະການ ກ່ອນເດີນທາງເຂົ້າ ສປປ ລາວ.

**ມາດຕາ 9 (ປັບປຸງ) ເອກະສານປະກອບຂໍອະນຸຍາດເຄື່ອນໄຫວວຽກງານສື່ມວນຊົນ ຂອງນັກຂ່າວຕ່າງປະເທດທີ່ບໍ່ປະຈຳການ**

ເອກະສານປະກອບ ມີ ດັ່ງນີ້:

1. ໜັງສືສະເໜີ ຕາມແບບພິມ ທີ່ກະຊວງການຕ່າງປະເທດ ກຳນົດ;
2. ສຳເນົາໜັງສືຜ່ານແດນຂອງນັກຂ່າວຕ່າງປະເທດທີ່ບໍ່ປະຈຳການ.

**ມາດຕາ 10 (ປັບປຸງ) ການພິຈາລະນາອະນຸຍາດໃຫ້ນັກຂ່າວຕ່າງປະເທດທີ່ບໍ່ປະຈຳການ ເຄື່ອນໄຫວວຽກງານສື່ມວນຊົນ**

ກະຊວງການຕ່າງປະເທດ ພິຈາລະນາ ອະນຸຍາດໃຫ້ນັກຂ່າວຕ່າງປະເທດທີ່ບໍ່ປະຈຳການ ເຄື່ອນໄຫວວຽກງານສື່ມວນຊົນ ແລະ ແຈ້ງຜົນການພິຈາລະນາຂອງຕົນ ໃຫ້ນັກຂ່າວຕ່າງປະເທດທີ່ບໍ່ປະຈຳການ ຊາບ ເປັນລາຍລັກອັກສອນ ພາຍໃນ ສິບວັນ ລັດຖະການ ນັບແຕ່ວັນໄດ້ຮັບໜັງສືສະເໜີ ພ້ອມດ້ວຍເອກະສານປະກອບ ຄົບຖ້ວນ ແລະ ຖືກຕ້ອງ.

ໃນກໍລະນີເຫັນດີ, ກະຊວງການຕ່າງປະເທດ ກໍອອກໜັງສືອະນຸຍາດສື່ມວນຊົນຕ່າງປະເທດ ໃຫ້ນັກຂ່າວຕ່າງປະເທດທີ່ບໍ່ປະຈຳການ.

ໃນກໍລະນີຕ້ອງຂໍວີຊາ, ນັກຂ່າວຕ່າງປະເທດທີ່ບໍ່ປະຈຳການ ຕ້ອງສະເໜີຂໍວີຊາ ຢູ່ ສຳນັກງານຜູ້ຕາງໜ້າ ແຫ່ງ ສປປ ລາວ ຫຼື ໜ່ວຍງານວີຊາກັບດ່ານ ຢູ່ ສປປ ລາວ ພາຍຫຼັງໄດ້ຮັບການອະນຸຍາດຈາກກະຊວງການຕ່າງປະເທດ.

ພາຍຫຼັງນັກຂ່າວຕ່າງປະເທດທີ່ບໍ່ປະຈຳການ ໄດ້ຮັບການອະນຸຍາດໃຫ້ເຂົ້າມາເຄື່ອນໄຫວວຽກງານສື່ມວນຊົນ ຢູ່ ສປປ ລາວ ແລ້ວ ໃຫ້ມາຮັບໜັງສືອະນຸຍາດສື່ມວນຊົນຕ່າງປະເທດ ພ້ອມທັງຮັບຟັງການແນະນຳການເຄື່ອນໄຫວຂອງສື່ມວນຊົນ ຢູ່ ກົມການຂ່າວ, ກະຊວງການຕ່າງປະເທດ.

**ມາດຕາ 11 (ປັບປຸງ) ການເຄື່ອນໄຫວວຽກງານສື່ມວນຊົນຂອງນັກຂ່າວຕ່າງປະເທດທີ່ບໍ່ປະຈຳການ**

ໃນເວລາເຄື່ອນໄຫວວຽກງານສື່ມວນຊົນ ຢູ່ ສປປ ລາວ, ນັກຂ່າວຕ່າງປະເທດທີ່ບໍ່ປະຈຳການ ຕ້ອງຖືໜັງສືຜ່ານແດນ ແລະ ໜັງສືອະນຸຍາດສື່ມວນຊົນຕ່າງປະເທດ ຕິດຕົວ ແລະ ຕ້ອງເຄື່ອນໄຫວຖືກຕ້ອງ ຕາມຈຸດປະສົງ ແລະ ແຜນການເຄື່ອນໄຫວ ທີ່ໄດ້ກຳນົດໄວ້ ໃນໜັງສືອະນຸຍາດ ແລະ ການແນະນຳຂອງກົມການຂ່າວ, ກະຊວງການຕ່າງປະເທດ.

ແຜນການເຄື່ອນໄຫວຂອງນັກຂ່າວຕ່າງປະເທດທີ່ບໍ່ປະຈຳການ ສາມາດປັບປຸງໄດ້ ພາຍຫຼັງໄດ້ຮັບອະນຸຍາດຈາກກະຊວງການຕ່າງປະເທດ.

### ມາດຕາ 12 (ປັບປຸງ) ນັກຂ່າວທີ່ຕິດຕາມຄະນະຜູ້ແທນຕ່າງປະເທດ

ອົງການຈັດຕັ້ງຂອງ ສປປ ລາວ ທີ່ຮັບຜິດຊອບ ຕ້ອງດຳເນີນຂັ້ນຕອນການ ເຂົ້າ-ອອກ ສປປ ລາວ ແລະ ແຈ້ງໃຫ້ກະຊວງການຕ່າງປະເທດ ເພື່ອປະສານງານ ສຳລັບນັກຂ່າວຕ່າງປະເທດ ທີ່ຕິດຕາມຄະນະຜູ້ແທນຕ່າງປະເທດ ເດີນທາງມາຢ້ຽມຢາມ ແລະ ເຂົ້າຮ່ວມກອງປະຊຸມສາກົນ ຢູ່ ສປປ ລາວ ຕາມການເຊື້ອເຊີນຂອງການນຳພັກ-ລັດ ຫຼື ກະຊວງການຕ່າງປະເທດ ເພື່ອເກັບກຳ ແລະ ລາຍງານຂ່າວ ກ່ຽວກັບ ການເຄື່ອນໄຫວຂອງຄະນະຜູ້ແທນຕ່າງປະເທດ ຕາມທີ່ໄດ້ກຳນົດໄວ້ໃນແຜນການເຄື່ອນໄຫວທາງການ.

ຖ້ານັກຂ່າວຕ່າງປະເທດ ຫາກມີຈຸດປະສົງເຄື່ອນໄຫວວຽກງານສື່ມວນຊົນ ນອກແຜນການເຄື່ອນໄຫວທາງການຂອງຄະນະຜູ້ແທນຕ່າງປະເທດທີ່ໄດ້ກຳນົດໄວ້ນັ້ນ, ຜູ້ກ່ຽວ ຕ້ອງປະຕິບັດ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 8, 9, 10 ແລະ 11 ຂອງດຳລັດສະບັບນີ້.

ສຳລັບນັກຂ່າວຕ່າງປະເທດ ທີ່ຕິດຕາມຄະນະຜູ້ແທນຕ່າງປະເທດ ເດີນທາງມາຢ້ຽມຢາມ ແລະ ເຂົ້າຮ່ວມກອງປະຊຸມສາກົນ ຢູ່ ສປປ ລາວ ຕາມການເຊື້ອເຊີນຂອງກະຊວງ, ອົງການ ຂອງ ສປປ ລາວ ເພື່ອເກັບກຳ ແລະ ລາຍງານຂ່າວ ກ່ຽວກັບ ການເຄື່ອນໄຫວດັ່ງກ່າວນັ້ນ, ອົງການຈັດຕັ້ງຂອງ ສປປ ລາວ ທີ່ຮັບຜິດຊອບ ຕ້ອງປະຕິບັດ ຕາມ ມາດຕາ 8, 9 ແລະ 10 ຂອງດຳລັດສະບັບນີ້ ແລະ ນັກຂ່າວຕ່າງປະເທດ ຕ້ອງເຄື່ອນໄຫວ ຕາມການແນະນຳຂອງກົມການຂ່າວ, ກະຊວງການຕ່າງປະເທດ.

## ໝວດທີ 2
## ຫ້ອງການຜູ້ຕາງໜ້າສື່ມວນຊົນຕ່າງປະເທດ

### ມາດຕາ 13 (ປັບປຸງ) ການສ້າງຕັ້ງຫ້ອງການຜູ້ຕາງໜ້າສື່ມວນຊົນຕ່າງປະເທດ

ສື່ມວນຊົນຕ່າງປະເທດ ທີ່ມີຈຸດປະສົງສ້າງຕັ້ງຫ້ອງການຜູ້ຕາງໜ້າຂອງຕົນ ຕ້ອງຍື່ນໜັງສືສະເໜີ ພ້ອມດ້ວຍເອກະສານປະກອບ ຕໍ່ກະຊວງຕ່າງປະເທດ ຫຼື ສຳນັກງານຜູ້ຕາງໜ້າ ແຫ່ງ ສປປ ລາວ ໂດຍກົງ ຫຼື ຜ່ານທາງ ອີເມວ, ໄປສະນີ ຫຼື ໂທລະສານ.

### ມາດຕາ 14 (ປັບປຸງ) ເອກະສານປະກອບຂໍອະນຸຍາດສ້າງຕັ້ງຫ້ອງການຜູ້ຕາງໜ້າສື່ມວນຊົນຕ່າງປະເທດ

ເອກະສານປະກອບຂໍອະນຸຍາດສ້າງຕັ້ງຫ້ອງການຜູ້ຕາງໜ້າສື່ມວນຊົນ ມີ ດັ່ງນີ້:

1. ໜັງສືສະເໜີ ຂໍອະນຸຍາດສ້າງຕັ້ງຫ້ອງການຜູ້ຕາງໜ້າອົງການສື່ມວນຊົນ ຕາມແບບພິມ ທີ່ກະຊວງການຕ່າງປະເທດ ກຳນົດ;

2. ສຳເນົາໜັງສືຢັ້ງຢືນສະຖານະພາບຂອງສື່ມວນຊົນຕ່າງປະເທດ ທີ່ໄດ້ຮັບການຢັ້ງຢືນຄວາມຖືກຕ້ອງຕາມຄວາມເປັນຈິງ ແລະ ກົດໝາຍ ຫຼື ປະຕິບັດຕາມຫຼັກການຕອບສະໜອງ ເຊິ່ງກັນ ແລະ ກັນ;

3. ຂໍ້ມູນພື້ນຖານກ່ຽວກັບສື່ມວນຊົນຕ່າງປະເທດ.

**ມາດຕາ 15 (ປັບປຸງ) ການພິຈາລະນາອະນຸຍາດໃຫ້ສ້າງຕັ້ງຫ້ອງການຜູ້ຕາງໜ້າສື່ມວນຊົນຕ່າງປະເທດ**

ກະຊວງການຕ່າງປະເທດ ພິຈາລະນາ ການສະເໜີຂໍອະນຸຍາດສ້າງຕັ້ງຫ້ອງການຜູ້ຕາງໜ້າສື່ມວນຊົນຕ່າງປະເທດ ພາຍໃນ ຫົກສິບ ວັນ ນັບແຕ່ວັນໄດ້ຮັບໜັງສືສະເໜີ ພ້ອມດ້ວຍເອກະສານປະກອບ ຄົບຖ້ວນ ແລະ ຖືກຕ້ອງ ລວມທັງແຈ້ງຜົນການພິຈາລະນາເປັນລາຍລັກອັກສອນ ໃຫ້ສື່ມວນຊົນຕ່າງປະເທດ ຊາບ. ຖ້າກະຊວງການຕ່າງປະເທດ ຫາກເຫັນດີ ກໍອອກໜັງສືອະນຸຍາດສ້າງຕັ້ງ ໃຫ້ຫ້ອງການຜູ້ຕາງໜ້າສື່ມວນຊົນຕ່າງປະເທດ.

**ມາດຕາ 16 (ປັບປຸງ) ການເຄື່ອນໄຫວຂອງຫ້ອງການຜູ້ຕາງໜ້າສື່ມວນຊົນຕ່າງປະເທດ**

ນັກຂ່າວຕ່າງປະເທດທີ່ປະຈຳການ ຊຶ່ງຖືກແຕ່ງຕັ້ງມາປະຈຳການ ຢູ່ ຫ້ອງການຜູ້ຕາງໜ້າສື່ມວນຊົນຕ່າງປະເທດ ຕ້ອງຍື່ນໜັງສືແຕ່ງຕັ້ງຂອງຕົນ ຕໍ່ກົມການຂ່າວ, ກະຊວງການຕ່າງປະເທດ ພາຍໃນ ສາມສິບ ວັນລັດຖະການ ນັບແຕ່ວັນໄດ້ຮັບການເຫັນດີຈາກກະຊວງການຕ່າງປະເທດ ເພື່ອຮັບໜັງສືອະນຸຍາດການສ້າງຕັ້ງຫ້ອງການຜູ້ຕາງໜ້າສື່ມວນຊົນຕ່າງປະເທດ.

ຫົວໜ້າຫ້ອງການຜູ້ຕາງໜ້າສື່ມວນຊົນຕ່າງປະເທດ ແມ່ນຜູ້ຕາງໜ້າທີ່ຖືກຕ້ອງຕາມກົດໝາຍຂອງຫ້ອງການດັ່ງກ່າວ.

ຫ້ອງການຜູ້ຕາງໜ້າສື່ມວນຊົນຕ່າງປະເທດ ສາມາດເປີດຫ້ອງການຂອງຕົນ ຢູ່ ນະຄອນຫຼວງວຽງຈັນ, ນະຄອນຫຼວງພະບາງ, ນະຄອນໄກສອນພົມວິຫານ ຫຼື ນະຄອນປາກເຊ ພາຍຫຼັງໄດ້ຮັບການເຫັນດີຈາກກະຊວງການຕ່າງປະເທດ ແລະ ຄະນະກຳມະການປົກຄອງແຂວງຂັ້ນແຂວງດັ່ງກ່າວ.

ຫ້ອງການຜູ້ຕາງໜ້າສື່ມວນຊົນຕ່າງປະເທດ ສາມາດແຕ່ງຕັ້ງນັກຂ່າວຂອງຕົນໄປເຄື່ອນໄຫວ ຢູ່ ທ້ອງຖິ່ນອື່ນ ນອກຈາກບ່ອນທີ່ຫ້ອງການຕັ້ງຢູ່ ພາຍຫຼັງໄດ້ຮັບການເຫັນດີຈາກກະຊວງການຕ່າງປະເທດ ແລະ ຄະນະກຳມະການປົກຄອງແຂວງຂັ້ນທີ່ກ່ຽວຂ້ອງ. ຫ້ອງການຜູ້ຕາງໜ້າສື່ມວນຊົນຕ່າງປະເທດ ຕ້ອງຍື່ນໜັງສືສະເໜີ ພ້ອມດ້ວຍເອກະສານປະກອບ ຕໍ່ກະຊວງການຕ່າງປະເທດ ໂດຍກົງ ຫຼື ຜ່ານທາງອີເມວ, ໄປສະນີ ຫຼື ໂທລະສານ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 8 ຂອງດຳລັດສະບັບນີ້.

ກະຊວງການຕ່າງປະເທດ ເປັນເຈົ້າການປະສານສົມທົບກັບ ຄະນະກຳມະການປົກຄອງຂັ້ນແຂວງທີ່ກ່ຽວຂ້ອງ ເພື່ອພິຈາລະນາ. ຈາກນັ້ນ, ກໍແຈ້ງຕອບຫ້ອງການຜູ້ຕາງໜ້າສື່ມວນຊົນຕ່າງປະເທດ ເປັນລາຍລັກອັກສອນ ພາຍໃນ ຊາວ ວັນ ພາຍຫຼັງໄດ້ຮັບໜັງສືສະເໜີ ພ້ອມດ້ວຍເອກະສານປະກອບ ຄົບຖ້ວນ ແລະ ຖືກຕ້ອງ.

ຫ້ອງການຜູ້ຕາງໜ້າສື່ມວນຊົນຕ່າງປະເທດ ຕ້ອງຮັບຜິດຊອບຕໍ່ການເຄື່ອນໄຫວຂອງນັກຂ່າວທີ່ຕົນ ໄດ້ແຕ່ງຕັ້ງໄປເຄື່ອນໄຫວຢູ່ທ້ອງຖິ່ນອື່ນນັ້ນ.

**ມາດຕາ 17 (ໃໝ່) ການແຈ້ງທີ່ຢູ່ຂອງຫ້ອງການຜູ້ຕາງໜ້າສື່ມວນຊົນຕ່າງປະເທດ**

ຫ້ອງການຜູ້ຕາງໜ້າສື່ມວນຊົນຕ່າງປະເທດ ຕ້ອງແຈ້ງທີ່ຢູ່ຫ້ອງການຂອງຕົນ ເປັນລາຍລັກອັກສອນ ໃຫ້ກະຊວງການຕ່າງປະເທດຊາບ ສາມສິບ ວັນ ກ່ອນເປີດຫ້ອງການຢ່າງເປັນທາງການ. ໃນກໍລະນີມີການປ່ຽນທີ່ຢູ່ ກໍຕ້ອງແຈ້ງໃຫ້ກະຊວງການຕ່າງປະເທດ ຊາບ ສາມສິບ ວັນລ່ວງໜ້າ.

**ມາດຕາ 18 (ໃໝ່) ການອຳນວຍຄວາມສະດວກໃຫ້ແກ່ການເຄື່ອນໄຫວຂອງຫ້ອງການຜູ້ຕາງໜ້າສື່ມວນຊົນຕ່າງປະເທດ**

ຫ້ອງການຜູ້ຕາງໜ້າສື່ມວນຊົນຕ່າງປະເທດ ປະຈຳຢູ່ ສປປ ລາວ ທີ່ມີຈຸດປະສົງສະເໜີຂໍເຮັດຕາປະທັບ ແລະ ມີຂໍ້ສະເໜີອື່ນ ທີ່ກ່ຽວຂ້ອງກັບການເຄື່ອນໄຫວວຽກງານສື່ມວນຊົນ ຢູ່ ສປປ ລາວ ຕ້ອງຍື່ນໜັງສືສະເໜີ ຕໍ່ກະຊວງການຕ່າງປະເທດ ເພື່ອປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການອຳນວຍຄວາມສະດວກ ຕາມກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ.

**ມາດຕາ 19 (ປັບປຸງ) ການຍຸບເລີກຫ້ອງການຜູ້ຕາງໜ້າສື່ມວນຊົນຕ່າງປະເທດ**

ຫ້ອງການຜູ້ຕາງໜ້າສື່ມວນຊົນຕ່າງປະເທດ ຈະຖືກຍຸບເລີກ ໂດຍອັດຕະໂນມັດ ເມື່ອບໍ່ມີນັກຂ່າວທີ່ປະຈຳການ ປະຈຳການ ຢູ່ ຫ້ອງການດັ່ງກ່າວ ພາຍໃນ ໜຶ່ງຮ້ອຍແປດສິບ ວັນ.

ຫ້ອງການຜູ້ຕາງໜ້າສື່ມວນຊົນຕ່າງປະເທດ ຕ້ອງແຈ້ງໃຫ້ກະຊວງການຕ່າງປະເທດຊາບ ສາມສິບ ວັນ ກ່ອນວັນຍຸບເລີກ ພ້ອມທັງສົ່ງໜັງສືອະນຸຍາດສ້າງຕັ້ງຫ້ອງການຂອງຕົນຄືນໃຫ້ ກະຊວງການຕ່າງປະເທດ ສາມ ວັນ ກ່ອນວັນຍຸບເລີກ.

## ໝວດທີ 3
## ນັກຂ່າວຕ່າງປະເທດທີ່ປະຈຳການ

**ມາດຕາ 20 (ປັບປຸງ) ການແຕ່ງຕັ້ງນັກຂ່າວຕ່າງປະເທດທີ່ປະຈຳການ**

ສື່ມວນຊົນຕ່າງປະເທດ ທີ່ມີຈຸດປະສົງແຕ່ງຕັ້ງນັກຂ່າວມາປະຈຳການ ຢູ່ ຫ້ອງການຜູ້ຕາງໜ້າຂອງຕົນ ຢູ່ ສປປ ລາວ ຕ້ອງຍື່ນໜັງສືສະເໜີ ພ້ອມດ້ວຍເອກະສານປະກອບ ຕໍ່ກະຊວງການຕ່າງປະເທດ ຫຼື ສຳນັກງານຜູ້ຕາງໜ້າ ແຫ່ງ ສປປ ລາວ ໂດຍກົງ ຫຼື ຜ່ານທາງ ອີເມວ, ໄປສະນີ ຫຼື ໂທລະສານ.

**ມາດຕາ 21 (ໃໝ່) ເອກະສານປະກອບຂໍອະນຸຍາດຂອງນັກຂ່າວຕ່າງປະເທດທີ່ປະຈຳການ**

ເອກະສານປະກອບ ຂໍອະນຸຍາດຂອງນັກຂ່າວຕ່າງປະເທດທີ່ປະຈຳການ ມີ ດັ່ງນີ້:

1. ໜັງສືສະເໜີ ຕາມແບບພິມຂອງກະຊວງການຕ່າງປະເທດ ກຳນົດ;
2. ໜັງສືແຕ່ງຕັ້ງນັກຂ່າວຕ່າງປະເທດທີ່ປະຈຳການ ຂອງຫົວໜ້າສື່ມວນຊົນຕ່າງປະເທດ ຫຼື ຂອງບຸກຄົນທີ່ໄດ້ຮັບການມອບສິດຈາກຫົວໜ້າສື່ມວນຊົນຕ່າງປະເທດ;
3. ຊີວະປະຫວັດຂອງນັກຂ່າວຕ່າງປະເທດທີ່ປະຈຳການ;
4. ສຳເນົາໜັງສືຜ່ານແດນຂອງນັກຂ່າວທີ່ປະຈຳການ;

**ມາດຕາ 22 (ໃໝ່) ການພິຈາລະນາອະນຸຍາດຂອງນັກຂ່າວຕ່າງປະເທດທີ່ປະຈຳການ**

ກະຊວງການຕ່າງປະເທດ ພິຈາລະນາ ການສະເໜີຂໍອະນຸຍາດຂອງນັກຂ່າວຕ່າງປະເທດທີ່ປະຈໍາການ ພາຍໃນ ສິບຫ້າ ວັນ ນັບແຕ່ວັນ ໄດ້ຮັບໜັງສືສະເໜີ ພ້ອມດ້ວຍເອກະສານປະກອບ ຄົບຖ້ວນ ແລະ ຖືກຕ້ອງ. ຖ້າກະຊວງການຕ່າງປະເທດ ຫາກເຫັນດີ ກໍຈະແຈ້ງໃຫ້ສື່ມວນຊົນຕ່າງປະເທດ ຊາບ ເປັນລາຍລັກອັກສອນ ເພື່ອໃຫ້ຜູ້ກ່ຽວສະເໜີຂໍວີຊາ ຢູ່ ສໍານັກງານຜູ້ຕາງໜ້າ ແຫ່ງ ສປປ ລາວ ຫຼື ໜ່ວຍງານວີຊາກັບດ່ານ ຢູ່ ສປປ ລາວ.

ຜົວ ຫຼື ເມຍ, ລູກ, ພໍ່ ແລະ ແມ່ ຂອງນັກຂ່າວຕ່າງປະເທດທີ່ປະຈໍາການ ບໍ່ໄດ້ຮັບນະໂຍບາຍຄືກັນກັບຜູ້ກ່ຽວ ຊຶ່ງຕ້ອງປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງຂອງ ສປປ ລາວ.

### ມາດຕາ 23 (ໃໝ່) ການສະເໜີ ສັບປ່ຽນ, ເພີ່ມ ແລະ ແຕ່ງຕັ້ງ ນັກຂ່າວຕ່າງປະເທດ

ຫ້ອງການຜູ້ຕາງໜ້າສື່ມວນຊົນຕ່າງປະເທດ ທີ່ມີຈຸດປະສົງສະເໜີ ສັບປ່ຽນ ແລະ ເພີ່ມ ຈໍານວນນັກຂ່າວທີ່ປະຈໍາການ ໃຫ້ປະຕິບັດຕາມທີ່ໄດ້ກໍານົດໄວ້ໃນມາດຕາ 20, 21 ແລະ 22 ຂອງດໍາລັດສະບັບນີ້.

ສໍາລັບການແຕ່ງຕັ້ງນັກຂ່າວຕ່າງປະເທດ ເພື່ອມາສະໜັບສະໜູນນັກຂ່າວຕ່າງປະເທດທີ່ປະຈໍາການ ໃຫ້ປະຕິບັດຕາມທີ່ໄດ້ກໍານົດໄວ້ໃນ ມາດຕາ 8, 9 ແລະ 10 ຂອງດໍາລັດສະບັບນີ້. ນັກຂ່າວດັ່ງກ່າວນັ້ນ ຈະບໍ່ມີສະຖານະພາບຄືກັບນັກຂ່າວຕ່າງປະເທດທີ່ປະຈໍາການ.

### ມາດຕາ 24 (ປັບປຸງ) ການ ຂໍວີຊາ ແລະ ບັດອະນຸຍາດພັກເຊົາຊົ່ວຄາວ ຂອງນັກຂ່າວຕ່າງປະເທດທີ່ປະຈໍາການ

ນັກຂ່າວຕ່າງປະເທດທີ່ປະຈໍາການ ຕ້ອງຍື່ນໜັງສືສະເໜີ ພ້ອມດ້ວຍເອກະສານປະກອບ ເພື່ອຂໍວີຊາ ແລະ ຂໍບັດອະນຸຍາດພັກເຊົາຊົ່ວຄາວ ຕໍ່ກະຊວງການຕ່າງປະເທດ ເພື່ອ ພິຈາລະນາ ແລະ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ.

ການ ອອກ, ປະຕິເສດ ຫຼື ລົບລ້າງ ວີຊາ ແລະ ບັດອະນຸຍາດພັກເຊົາຊົ່ວຄາວ ຂອງນັກຂ່າວຕ່າງປະເທດທີ່ປະຈໍາການ ໃຫ້ປະຕິບັດຕາມກົດໝາຍ ວ່າດ້ວຍການເຂົ້າ-ອອກ ແລະ ຄຸ້ມຄອງຄົນຕ່າງປະເທດ ຢູ່ ສປປ ລາວ ແລະ ລະບຽບການທີ່ກ່ຽວຂ້ອງ.

ນັກຂ່າວຕ່າງປະເທດທີ່ປະຈໍາການ ຈະໄດ້ຮັບການຕໍ່ ວີຊາ ແລະ ບັດອະນຸຍາດພັກເຊົາຊົ່ວຄາວ ພາຍຫຼັງໄດ້ຮັບການເຫັນດີ ຈາກກະຊວງການຕ່າງປະເທດ.

### ມາດຕາ 25 (ໃໝ່) ນັກຂ່າວຕ່າງປະເທດທີ່ປະຈໍາການ ທີ່ເຮັດວຽກໃຫ້ຫຼາຍຫ້ອງການຜູ້ຕາງໜ້າສື່ມວນຊົນຕ່າງປະເທດ

ນັກຂ່າວຕ່າງປະເທດທີ່ປະຈໍາການ ຂອງຫ້ອງການຜູ້ຕາງໜ້າສື່ມວນຊົນຕ່າງປະເທດໜຶ່ງ ສາມາດເຮັດວຽກໃຫ້ຫຼາຍຫ້ອງການຜູ້ຕາງໜ້າສື່ມວນຊົນຕ່າງປະເທດ.

ສື່ມວນຊົນຕ່າງປະເທດ ສາມາດແຕ່ງຕັ້ງນັກຂ່າວທີ່ປະຈໍາການ ຢູ່ ປະເທດອື່ນ ເຮັດວຽກເປັນນັກຂ່າວຕ່າງປະເທດທີ່ປະຈໍາການ ຢູ່ ສປປ ລາວ.

ນັກຂ່າວຕ່າງປະເທດທີ່ປະຈໍາການ ທີ່ໄດ້ຮັບການແຕ່ງຕັ້ງຈາກຫຼາຍສື່ມວນຊົນຕ່າງປະເທດ ຕ້ອງປະຕິບັດຕາມລະບຽບການສໍາລັບນັກຂ່າວຕ່າງປະເທດທີ່ປະຈໍາການ.

ໃນກໍລະນີ, ນັກຂ່າວຕ່າງປະເທດທີ່ປະຈໍາການ ໄດ້ຮັບການແຕ່ງຕັ້ງໃຫ້ເປັນນັກຂ່າວຕ່າງປະເທດທີ່ປະຈໍາການຂອງສື່ມວນຊົນຕ່າງປະເທດອື່ນ, ຜູ້ກ່ຽວ ຕ້ອງໄດ້ຮັບການເຫັນດີເປັນລາຍລັກອັກສອນຈາກສື່ມວນຊົນຕ່າງປະເທດຕົ້ນສັງກັດຂອງຕົນ.

**ມາດຕາ 26 (ໃໝ່) ການສະເໜີຂໍບັດນັກຂ່າວຕ່າງປະເທດ**

ນັກຂ່າວຕ່າງປະເທດທີ່ປະຈຳການ ທີ່ມີຈຸດປະສົງສະເໜີຂໍບັດນັກຂ່າວຕ່າງປະເທດ ຕ້ອງຍື່ນໜັງສືສະເໜີ ພ້ອມດ້ວຍເອກະສານປະກອບ ຕໍ່ກະຊວງການຕ່າງປະເທດ ໂດຍກົງ ຫຼື ຜ່ານທາງ ອີເມວ, ໄປສະນີ ຫຼື ໂທລະສານ.

**ມາດຕາ 27 (ໃໝ່) ເອກະສານປະກອບການສະເໜີຂໍບັດນັກຂ່າວຕ່າງປະເທດ**

ເອກະສານປະກອບການສະເໜີຂໍບັດນັກຂ່າວຕ່າງປະເທດ ມີ ດັ່ງນີ້:

1. ໜັງສືສະເໜີ ຕາມແບບພິມຂອງກະຊວງການຕ່າງປະເທດ ກຳນົດ 1 ສະບັບ;
2. ສຳເນົາໜັງສືຜ່ານແດນຂອງນັກຂ່າວຕ່າງປະເທດທີ່ປະຈຳການ 1 ສະບັບ;
3. ຮູບຂະໜາດ 3X4 ຊັງຕີແມັດ ຂອງນັກຂ່າວຕ່າງປະເທດທີ່ປະຈຳການ ຈຳນວນ 2 ໃບ, ຖ່າຍບໍ່ເກີນ ສາມ ເດືອນ.

**ມາດຕາ 28 (ໃໝ່) ການພິຈາລະນາອອກບັດນັກຂ່າວຕ່າງປະເທດ**

ກະຊວງການຕ່າງປະເທດ ພິຈາລະນາ ອອກບັດນັກຂ່າວໃຫ້ນັກຂ່າວຕ່າງປະເທດທີ່ປະຈຳການ ພາຍໃນ ສາມ ວັນລັດຖະການ ພາຍຫຼັງໄດ້ຮັບໜັງສືສະເໜີ ແລະ ເອກະສານປະກອບ ຄົບຖ້ວນ ແລະ ຖືກຕ້ອງ.

**ມາດຕາ 29 (ໃໝ່) ການອອກບັດນັກຂ່າວຕ່າງປະເທດຄືນໃໝ່**

ນັກຂ່າວຕ່າງປະເທດທີ່ປະຈຳການ ທີ່ເຮັດບັດນັກຂ່າວຕ່າງປະເທດຂອງຕົນ ເສຍ ຫຼື ເສຍຫາຍ ຕ້ອງຍື່ນ ໜັງສືສະເໜີ ພ້ອມດ້ວຍເອກະສານປະກອບ ຕໍ່ກະຊວງການຕ່າງປະເທດໂດຍກົງ ຫຼື ຜ່ານທາງ ອີເມວ, ໄປສະນີ ຫຼື ໂທລະສານ ເພື່ອຂໍອອກບັດນັກຂ່າວຕ່າງປະເທດຄືນໃໝ່.

ເອກະສານປະກອບສະເໜີຂໍອອກບັດນັກຂ່າວຕ່າງປະເທດຄືນໃໝ່ ມີ ດັ່ງນີ້:

1. ໜັງສືສະເໜີ ຕາມແບບພິມຂອງກະຊວງການຕ່າງປະເທດ ກຳນົດ 1 ສະບັບ;
2. ສຳເນົາໜັງສືຜ່ານແດນຂອງນັກຂ່າວຕ່າງປະເທດທີ່ປະຈຳການ 1 ສະບັບ;
3. ຮູບຂະໜາດ 3X4 ຊັງຕີແມັດ ຈຳນວນ 2 ໃບ ຂອງນັກຂ່າວຕ່າງປະເທດທີ່ປະຈຳການ, ຖ່າຍບໍ່ເກີນ ສາມ ເດືອນ;
4. ບັດນັກຂ່າວທີ່ເສຍຫາຍ ຫຼື ໜັງສືຢັ້ງຢືນແຈ້ງເສຍຂອງເຈົ້າໜ້າທີ່ປ້ອງກັນຄວາມສະຫງົບທີ່ກ່ຽວຂ້ອງ 1 ສະບັບ.

**ມາດຕາ 30 (ໃໝ່) ອາຍຸ ແລະ ການຕໍ່ອາຍຸນຳໃຊ້ບັດນັກຂ່າວຕ່າງປະເທດ**

ບັດນັກຂ່າວຕ່າງປະເທດ ມີອາຍຸນຳໃຊ້ສູງສຸດບໍ່ເກີນ ສິບສອງ ເດືອນ ໂດຍສອດຄ່ອງກັບອາຍຸນຳໃຊ້ວີຊາ ຂອງຜູ້ກ່ຽວ ແລະ ສາມາດຕໍ່ອາຍຸການນຳໃຊ້ໄດ້.

ນັກຂ່າວຕ່າງປະເທດທີ່ປະຈຳການ ທີ່ມີຈຸດປະສົງສະເໜີຂໍຕໍ່ອາຍຸນຳໃຊ້ບັດນັກຂ່າວຂອງຕົນ ຕ້ອງຍື່ນໜັງສື ສະເໜີ ພ້ອມດ້ວຍເອກະສານປະກອບ ຕໍ່ກະຊວງການຕ່າງປະເທດ ໂດຍກົງ ຫຼື ຜ່ານທາງ ອີເມວ, ໄປສະນີ ຫຼື ໂທລະ ສານ ຊາວ ວັນ ກ່ອນບັດຂອງຕົນ ຈະໝົດອາຍຸນຳໃຊ້. ຖ້າກະຊວງການຕ່າງປະເທດ ຫາກເຫັນດີ ກໍຈະຕໍ່ອາຍຸການ ນຳໃຊ້ບັດນັກຂ່າວໃຫ້.

ເອກະສານປະກອບສະເໜີຂໍຕໍ່ອາຍຸການນໍາໃຊ້ບັດນັກຂ່າວຕ່າງປະເທດ ມີ ດັ່ງນີ້:

1. ໜັງສືສະເໜີ ຕາມແບບພິມຂອງກະຊວງການຕ່າງປະເທດ ກໍານົດ 1 ສະບັບ;
2. ໜັງສືຢັ້ງຢືນໃຫ້ສືບຕໍ່ເປັນນັກຂ່າວຕ່າງປະເທດທີ່ປະຈໍາການ ຂອງອົງການສື່ມວນຕ່າງປະເທດ;
3. ບັດນັກຂ່າວຂອງຜູ້ກ່ຽວ;
4. ສໍາເນົາໜັງສືຜ່ານແດນຂອງນັກຂ່າວຕ່າງປະເທດທີ່ປະຈໍາການ 1 ສະບັບ;
5. ຮູບຂະໜາດ 3X4 ຊັງຕີແມັດ ຈໍານວນ 2 ໃບຂອງນັກຂ່າວຕ່າງປະເທດທີ່ປະຈໍາການ, ຖ່າຍບໍ່ເກີນ ສາມ ເດືອນ.

**ມາດຕາ 31 (ໃໝ່) ການພິຈາລະນາຕໍ່ອາຍຸການນໍາໃຊ້ບັດນັກຂ່າວຕ່າງປະເທດ**

ກະຊວງການຕ່າງປະເທດ ພິຈາລະນາ ຕໍ່ອາຍຸການນໍາໃຊ້ບັດນັກຂ່າວຕ່າງປະເທດ ໃຫ້ນັກຂ່າວຕ່າງປະເທດທີ່ປະຈໍາການພາຍໃນ ສາມ ວັນລັດຖະການ ພາຍຫຼັງໄດ້ຮັບໜັງສືສະເໜີ ແລະ ເອກະສານປະກອບ ຄົບຖ້ວນ ແລະ ຖືກຕ້ອງ. ໃນກໍລະນີປະຕິເສດ, ກະຊວງການຕ່າງປະເທດ ກໍຈະແຈ້ງຕອບນັກຂ່າວຕ່າງປະເທດທີ່ປະຈໍາການ ເປັນລາຍລັກອັກສອນ.

**ມາດຕາ 32 (ໃໝ່) ການນໍາໃຊ້ບັດນັກຂ່າວຕ່າງປະເທດ**

ໃນການເຄື່ອນໄຫວວຽກງານສື່ມວນຊົນ ຢູ່ ສປປ ລາວ, ນັກຂ່າວຕ່າງປະເທດທີ່ປະຈໍາ ການຕ້ອງຖືບັດນັກຂ່າວຕ່າງປະເທດ ແລະ ໜັງສືຜ່ານແດນຂອງຕົນຕິດຕົວ ເພື່ອສະແດງຕໍ່ເຈົ້າໜ້າທີ່ທີ່ກ່ຽວຂ້ອງ ຕາມການສະເໜີ.

ເມື່ອນັກຂ່າວຕ່າງປະເທດທີ່ປະຈໍາການ ສິ້ນສຸດການປະຕິບັດໜ້າທີ່ຂອງຕົນ ຢູ່ ສປປ ລາວ, ຫ້ອງການຜູ້ຕາງໜ້າສື່ມວນຊົນຕ່າງປະເທດ ຕ້ອງແຈ້ງເປັນລາຍລັກອັກສອນໃຫ້ກະຊວງການຕ່າງປະເທດຊາບ ຢ່າງໜ້ອຍ ຊາວ ວັນ ກ່ອນການສິ້ນສຸດການປະຕິບັດໜ້າທີ່ ແລະ ຕ້ອງສົ່ງບັດນັກຂ່າວຕ່າງປະເທດ ຄືນໃຫ້ກະຊວງການຕ່າງປະເທດ ກ່ອນຜູ້ກ່ຽວເດີນທາງອອກ ສປປ ລາວ.

**ມາດຕາ 33 (ໃໝ່) ການໂຈະການເຄື່ອນໄຫວ ຫຼື ການລຶບລ້າງບັດນັກຂ່າວຕ່າງປະເທດ**

ການເຄື່ອນໄຫວຂອງນັກຂ່າວຕ່າງປະເທດທີ່ປະຈໍາການ ຈະຖືກໂຈະ ຫຼື ບັດນັກຂ່າວຕ່າງປະເທດຂອງຜູ້ກ່ຽວ ອາດຖືກລຶບລ້າງ ໃນກໍລະນີ ດັ່ງນີ້:

1. ມີການສະເໜີ ໂຈະການເຄື່ອນໄຫວ ຫຼື ລຶບລ້າງບັດນັກຂ່າວຕ່າງປະເທດ ຈາກພາກສ່ວນກ່ຽວຂ້ອງ;
2. ບັດນັກຂ່າວຕ່າງປະເທດ ໝົດອາຍຸການນໍາໃຊ້ ແຕ່ຍັງສືບຕໍ່ເຄື່ອນໄຫວ;
3. ເຄື່ອນໄຫວວຽກງານສື່ມວນຊົນໂດຍບໍ່ໄດ້ຮັບອະນຸຍາດ;
4. ມີການລະເມີດກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ.

ກະຊວງການຕ່າງປະເທດ ພິຈາລະນາ ໂຈະການເຄື່ອນໄຫວ ຫຼື ລຶບລ້າງບັດນັກຂ່າວຕ່າງປະເທດ ພ້ອມທັງແຈ້ງໃຫ້ຫ້ອງການຜູ້ຕາງໜ້າ ຊາບ ໂດຍດ່ວນ.

**ມາດຕາ 34 (ປັບປຸງ) ການເຄື່ອນໄຫວວຽກງານສື່ມວນຊົນຂອງນັກຂ່າວຕ່າງປະເທດທີ່ປະຈໍາການ**

ນັກຂ່າວຕ່າງປະເທດທີ່ປະຈຳການ ທີ່ມີຈຸດປະສົງສະເໜີຂໍສຳພາດການນຳຂັ້ນສູງຂອງພັກ-ລັດ, ຫ້ອງການຜູ້ຕາງໜ້າອົງການສື່ມວນຊົນຂອງຕ່າງປະເທດ ຕ້ອງຍື່ນໜັງສືສະເໜີ ພ້ອມດ້ວຍເອກະສານປະກອບ ຕໍ່ກະຊວງການຕ່າງປະເທດ ໂດຍກົງ ຫຼື ຜ່ານທາງອີເມວ, ໄປສະນີ ຫຼື ໂທລະສານ.

ນັກຂ່າວຕ່າງປະເທດທີ່ປະຈຳການ ທີ່ມີຈຸດປະສົງສະເໜີ ຂໍພົບປະ ຫຼື ສຳພາດການນຳຂອງກະຊວງ, ອົງການ, ຫ້ອງການຜູ້ຕາງໜ້າສື່ມວນຊົນຕ່າງປະເທດ ຕ້ອງຍື່ນໜັງສືສະເໜີ ພ້ອມດ້ວຍເອກະສານປະກອບ ຕໍ່ກະຊວງ ແລະ ອົງການ ທີ່ກ່ຽວຂ້ອງ ໂດຍກົງ ຫຼື ຜ່ານທາງ ອີເມວ, ໄປສະນີ ຫຼື ໂທລະສານ ພ້ອມທັງຕ້ອງແຈ້ງໃຫ້ກະຊວງການຕ່າງປະເທດ ເພື່ອຊາບ. ກະຊວງ ແລະ ອົງການ ທີ່ກ່ຽວຂ້ອງ ຕ້ອງແຈ້ງຕອບ ຫ້ອງການຜູ້ຕາງໜ້າສື່ມວນຊົນຕ່າງປະເທດ ເປັນລາຍລັກອັກສອນ ພາຍໃນ ຫ້າ ວັນລັດຖະການ.

ສຳລັບການສະເໜີເຄື່ອນໄຫວວຽກງານສື່ມວນຊົນ ຢູ່ ທ້ອງຖິ່ນ, ຫ້ອງການຜູ້ຕາງໜ້າສື່ມວນຊົນຕ່າງປະເທດ ຕ້ອງຍື່ນໜັງສືສະເໜີ ພ້ອມດ້ວຍເອກະສານປະກອບ ຕໍ່ຄະນະກຳມະການປົກຄອງຂັ້ນແຂວງທີ່ກ່ຽວຂ້ອງ ໂດຍກົງ ຫຼື ຜ່ານທາງ ອີເມວ, ໄປສະນີ ຫຼື ໂທລະສານ ພ້ອມທັງຕ້ອງແຈ້ງໃຫ້ກະຊວງການຕ່າງປະເທດ ເພື່ອຊາບ. ຄະນະກຳມະການປົກຄອງຂັ້ນແຂວງທີ່ກ່ຽວຂ້ອງ ຕ້ອງແຈ້ງຕອບ ຫ້ອງການຜູ້ຕາງໜ້າສື່ມວນຊົນຕ່າງປະເທດຊາບ ພາຍໃນ ຫ້າ ວັນລັດຖະການ. ນັກຂ່າວຕ່າງປະເທດທີ່ປະຈຳການ ຈະສາມາດເຄື່ອນໄຫວວຽກງານສື່ມວນຊົນ ຢູ່ທ້ອງຖິ່ນ ໄດ້ກໍຕໍ່ເມື່ອໄດ້ຮັບການເຫັນດີຈາກຄະນະກຳມະການປົກຄອງຂັ້ນແຂວງທີ່ກ່ຽວຂ້ອງ.

ເອກະສານປະກອບ ມີ ດັ່ງນີ້:

1. ໜັງສືສະເໜີ ຕາມແບບພິມຂອງກະຊວງການຕ່າງປະເທດ ກຳນົດ 1 ສະບັບ;
2. ສຳເນົາບັດນັກຂ່າວ 1 ສະບັບ.

## ໝວດທີ 4
## ຜູ້ຊ່ວຍວຽກສື່ມວນຊົນ ແລະ ຜູ້ຮ່ວມງານ

### ມາດຕາ 35 (ໃໝ່) ຜູ້ຊ່ວຍວຽກສື່ມວນຊົນ

ຫ້ອງການຜູ້ຕາງໜ້າສື່ມວນຊົນຕ່າງປະເທດ ສາມາດຈັດຈ້າງຜູ້ຊ່ວຍວຽກສື່ມວນຊົນ ເພື່ອຊ່ວຍວຽກງານຂອງຫ້ອງການ ແລະ ນັກຂ່າວຕ່າງປະເທດທີ່ປະຈຳການ ຂອງຕົນ ເປັນຕົ້ນ ການ ຖ່າຍຮູບ, ຖ່າຍທຳ, ແປພາສາ ແລະ ວຽກງານບໍລິຫານ ເພື່ອສະໜັບສະໜູນການເຄື່ອນໄຫວຂອງຫ້ອງການຜູ້ຕາງໜ້າສື່ມວນຊົນຕ່າງປະເທດ. ຜູ້ຊ່ວຍວຽກສື່ມວນຊົນ ບໍ່ມີສະຖານະພາບ ແລະ ບໍ່ສາມາດເຄື່ອນໄຫວວຽກງານສື່ມວນຊົນ ຄືກັນກັບນັກຂ່າວຕ່າງປະເທດທີ່ປະຈຳການ.

ຫ້ອງການຜູ້ຕາງໜ້າສື່ມວນຊົນຕ່າງປະເທດ ທີ່ມີຈຸດປະສົງຈັດຈ້າງຜູ້ຊ່ວຍວຽກສື່ມວນຊົນ ຕ້ອງຍື່ນໜັງສືສະເໜີ ພ້ອມດ້ວຍເອກະສານປະກອບ ຕໍ່ກະຊວງການຕ່າງປະເທດ ໂດຍກົງ ຫຼື ຜ່ານທາງ ອີເມວ, ໄປສະນີ ຫຼື ໂທລະສານ.

ເອກະສານປະກອບການສະເໜີຈັດຈ້າງຜູ້ຊ່ວຍວຽກສື່ມວນຊົນ ມີ ດັ່ງນີ້:

1. ໜັງສືສະເໜີ ຕາມແບບພິມຂອງກະຊວງການຕ່າງປະເທດ ກຳນົດ 1 ສະບັບ;
2. ຊີວະປະຫວັດຂອງບຸກຄົນທີ່ຈະເປັນຜູ້ຊ່ວຍວຽກສື່ມວນຊົນ ໂດຍໄດ້ຮັບການຢັ້ງຢືນຈາກອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ 1 ສະບັບ;

3. ຮູບຂະໜາດ 3X4 ຊັງຕີແມັດ ຈຳນວນ 2 ໃບຂອງຜູ້ທີ່ຈະເປັນຜູ້ຊ່ວຍວຽກສື່ມວນຊົນ, ຖ່າຍບໍ່ເກີນ ສາມ ເດືອນ.

ກະຊວງການຕ່າງປະເທດ ພິຈາລະນາ ແລະ ແຈ້ງຕອບຫ້ອງການຜູ້ຕາງໜ້າສື່ມວນຊົນຕ່າງປະເທດ ເປັນລາຍລັກອັກສອນ ພາຍໃນ ຊາວ ວັນ ພາຍຫຼັງໄດ້ຮັບໜັງສືສະເໜີ ພ້ອມດ້ວຍເອກະສານປະກອບ ຄົບຖ້ວນ ແລະ ຖືກຕ້ອງ.

ສຳລັບຂະບວນການຈັດຈ້າງຜູ້ຊ່ວຍວຽກສື່ມວນຊົນ ໃຫ້ປະຕິບັດຕາມດຳລັດ ວ່າດ້ວຍພະນັກງານທ້ອງຖິ່ນທີ່ເຮັດວຽກນຳອົງການຕ່າງປະເທດ ປະຈຳ ຢູ່ ສປປ ລາວ.

**ມາດຕາ 36 (ໃໝ່) ຜູ້ຮ່ວມງານ**

ຫ້ອງການຜູ້ຕາງໜ້າສື່ມວນຊົນຕ່າງປະເທດ ສາມາດຈັດຈ້າງຜູ້ຮ່ວມງານ ເພື່ອຊ່ວຍການເຄື່ອນໄຫວວຽກງານສື່ມວນຊົນຂອງ ນັກຂ່າວ ແລະ ຫ້ອງການຂອງຕົນ ເປັນຕົ້ນ ຖ່າຍຮູບ, ຖ່າຍທຳ ແລະ ແປພາສາ ສຳລັບກິດຈະກຳສະເພາະໃດໜຶ່ງ ແລະ ໃນໄລຍະເວລາໃດໜຶ່ງ ແຕ່ບໍ່ສາມາດເຮັດວຽກແທນນັກຂ່າວຕ່າງປະເທດທີ່ປະຈຳການ.

ເອກະສານປະກອບສະເໜີຈັດຈ້າງຜູ້ຮ່ວມງານ ມີ ດັ່ງນີ້:

1. ໜັງສືສະເໜີຕາມແບບພິມຂອງກະຊວງການຕ່າງປະເທດ ກຳນົດ 1 ສະບັບ;
2. ຊີວະປະຫວັດບຸກຄົນທີ່ສະເໜີຈັດຈ້າງເປັນຜູ້ຮ່ວມງານ ໂດຍໄດ້ຮັບການຢັ້ງຢືນຈາກອົງການປົກຄອງທ້ອງ ຖິ່ນທີ່ກ່ຽວຂ້ອງ 1 ສະບັບ;
3. ຮູບຂະໜາດ 3X4 ຊັງຕີແມັດ ຈຳນວນ 2 ໃບຂອງບຸກຄົນທີ່ສະເໜີຈັດຈ້າງເປັນຜູ້ຮ່ວມງານ, ຖ່າຍບໍ່ເກີນ ສາມ ເດືອນ.

ກະຊວງການຕ່າງປະເທດ ພິຈາລະນາ ແລະ ແຈ້ງຕອບຫ້ອງການຜູ້ຕາງໜ້າສື່ມວນຊົນຕ່າງປະເທດ ເປັນລາຍລັກອັກສອນ ພາຍໃນ ຊາວ ວັນ ພາຍຫຼັງໄດ້ຮັບໜັງສືສະເໜີ ພ້ອມດ້ວຍເອກະສານປະກອບ ຄົບຖ້ວນ ແລະ ຖືກຕ້ອງ.

## ໝວດທີ 5
## ການ ນຳເຂົ້າຊົ່ວຄາວ ແລະ ນຳອອກຄືນ ວັດຖຸປະກອນ ຂອງສື່ມວນຊົນຕ່າງປະເທດ

**ມາດຕາ 37 (ໃໝ່) ການນຳເຂົ້າຊົ່ວຄາວ**

ສື່ມວນຊົນຕ່າງປະເທດ ໄດ້ຮັບການອະນຸຍາດໃຫ້ນຳເຂົ້າວັດຖຸປະກອນອັນຈຳເປັນສຳລັບນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານສື່ມວນຊົນຂອງຕົນ ຢູ່ ສປປ ລາວ ຊົ່ວຄາວ ເປັນຕົ້ນ ກ້ອງຖ່າຍຮູບ, ກ້ອງຖ່າຍວິດີໂອ, ເຮືອບິນບໍ່ມີຄົນຂັບ, ເຄື່ອງບັນທຶກສຽງ ແລະ ວັດຖຸປະກອນອື່ນ ໂດຍໄດ້ຮັບການຍົກເວັ້ນພາສີ-ອາກອນ ໃນຮູບແບບ ການນຳເຂົ້າຊົ່ວຄາວ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ສຳລັບຂັ້ນຕອນການນຳເຂົ້າຊົ່ວຄາວ ໃຫ້ປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ສື່ມວນຊົນຕ່າງປະເທດ ສາມາດ ຕິດຕັ້ງ ແລະ ນຳໃຊ້ ເຄື່ອງຮັບສິ່ງສັນຍານສຽງ ແລະ ພາບ ຜ່ານດາວທຽມ ແລະ ອຸປະກອນສົ່ງສັນຍານພາບອອກຕ່າງປະເທດ ຜ່ານລະບົບເຄືອຂ່າຍການສື່ສານແຫ່ງຊາດ ຕາມກົດໝາຍຂອງ ສປປ ລາວ.

**ມາດຕາ 38 (ໃໝ່) ການນຳອອກຄືນ**

ສື່ມວນຊົນຕ່າງປະເທດ ຕ້ອງນຳອອກຄືນວັດຖຸປະກອນທີ່ຕົນນຳເຂົ້າ ພາຍຫຼັງສິ້ນສຸດການເຄື່ອນໄຫວວຽກງານສື່ມວນຊົນຂອງຕົນ ຢູ່ ສປປ ລາວ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

## ພາກທີ 3
## ການເຄື່ອນໄຫວວຽກງານສື່ມວນຊົນ ຢູ່ ສປປ ລາວ
## ຂອງສຳນັກງານຜູ້ຕາງໜ້າ ແລະ ອົງການຈັດຕັ້ງ ຕ່າງປະເທດ

**ມາດຕາ 39 (ປັບປຸງ) ການຈັດພິມ ແລະ ຈຳໜ່າຍ ສິ່ງພິມ ຂອງຕ່າງປະເທດ**

ການຈັດພິມ ແລະ ຈຳໜ່າຍ ສິ່ງພິມ ຂອງຕ່າງປະເທດ ໃຫ້ປະຕິບັດຕາມກົດໝາຍ ວ່າດ້ວຍການພິມຈຳໜ່າຍ, ກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ.

ສຳນັກງານຜູ້ຕາງໜ້າ ແລະ ອົງການຈັດຕັ້ງ ຕ່າງປະເທດ ທີ່ມີຈຸດປະສົງ ຈັດພິມ ແລະ ຈຳໜ່າຍ ສິ່ງພິມໃດໜຶ່ງ ຢູ່ ສປປ ລາວ ຕ້ອງຍື່ນໜັງສືສະເໜີ ຕໍ່ກະຊວງວັດທະນະທຳ ແລະ ການທ່ອງທ່ຽວ ພ້ອມທັງຕ້ອງສົ່ງສຳເນົາໜັງສືສະເໜີໃຫ້ກະຊວງການຕ່າງປະເທດ ເພື່ອຊາບ.

ຂັ້ນຕອນການສະເໜີຂໍອະນຸຍາດ ການຈັດພິມ ແລະ ຈຳໜ່າຍ ສິ່ງພິມ ຂອງຕ່າງປະເທດ ໃຫ້ປະຕິບັດຕາມລະບຽບການຂອງກະຊວງວັດທະນະທຳ ແລະ ການທ່ອງທ່ຽວ. ການເຄື່ອນໄຫວວຽກງານສື່ມວນຊົນ ຕາມທີ່ໄດ້ກຳນົດໄວ້ໃນມາດຕານີ້ ແລະ ການປ່ຽນແປງອື່ນ ນອກຈາກການສະເໜີເບື້ອງຕົ້ນນັ້ນ ຈະສາມາດດຳເນີນການໄດ້ກໍຕໍ່ເມື່ອໄດ້ຮັບການເຫັນດີເປັນລາຍລັກອັກສອນ ຈາກກະຊວງວັດທະນະທຳ ແລະ ການທ່ອງທ່ຽວ.

**ມາດຕາ 40 (ປັບປຸງ) ການຈັດກອງປະຊຸມຖະແຫຼງຂ່າວ**

ສຳນັກງານຜູ້ຕາງໜ້າ ແລະ ອົງການຈັດຕັ້ງ ຕ່າງປະເທດ ທີ່ມີຈຸດປະສົງຈັດກອງປະຊຸມຖະແຫຼງຂ່າວ ຢູ່ນະຄອນຫຼວງວຽງຈັນ ຕ້ອງຍື່ນໜັງສືສະເໜີ ຕໍ່ຄະນະໂຄສະນາອົບຮົມສູນກາງພັກ ຢ່າງໜ້ອຍ ຫ້າ ວັນລັດຖະການ ກ່ອນຈັດກອງປະຊຸມດັ່ງກ່າວ. ສຳລັບສຳນັກງານຜູ້ຕາງໜ້າຕ່າງປະເທດ ຕ້ອງສົ່ງສຳເນົາໜັງສືສະເໜີໃຫ້ກະຊວງການຕ່າງປະເທດ ເພື່ອຊາບ.

ສຳນັກງານຜູ້ຕາງໜ້າ ແລະ ອົງການຈັດຕັ້ງ ຕ່າງປະເທດ ທີ່ມີຈຸດປະສົງຈັດກອງປະຊຸມຖະແຫຼງຂ່າວ ຢູ່ທ້ອງຖິ່ນອື່ນ ຕ້ອງຍື່ນໜັງສືສະເໜີ ຕໍ່ຄະນະກຳມະການປົກຄອງຂັ້ນແຂວງ ທີ່ກ່ຽວຂ້ອງ ຢ່າງໜ້ອຍ ຫ້າ ວັນລັດຖະການ ກ່ອນຈັດກອງປະຊຸມດັ່ງກ່າວ. ສຳລັບສຳນັກງານຜູ້ຕາງໜ້າຕ່າງປະເທດ ຕ້ອງສົ່ງສຳເນົາໜັງສືສະເໜີໃຫ້ກະຊວງການຕ່າງປະເທດ ເພື່ອຊາບ.

ການຈັດກອງປະຊຸມຖະແຫຼງຂ່າວ ໂດຍຄະນະຜູ້ແທນຕ່າງປະເທດໃດໜຶ່ງ ໃນໄລຍະການຢ້ຽມຢາມ ສປປ ລາວ ຕາມຄຳເຊື້ອເຊີນຂອງການນຳພັກ, ລັດ ຫຼື ກະຊວງການຕ່າງປະເທດ ຕ້ອງປະຕິບັດຕາມແຜນການເຄື່ອນໄຫວ

ທາງການນັ້ນ. ອົງການຈັດຕັ້ງທີ່ຮັບຜິດຊອບການຢ້ຽມຢາມ ຕ້ອງແຈ້ງໃຫ້ກະຊວງການຕ່າງປະເທດ ຢ່າງໜ້ອຍ ໜຶ່ງ ວັນລັດຖະການ ກ່ອນຈັດກອງປະຊຸມຖະແຫຼງຂ່າວ.

ການຈັດກອງປະຊຸມຖະແຫຼງຂ່າວ ໂດຍຄະນະຜູ້ແທນຕ່າງປະເທດໃດໜຶ່ງ ໃນໄລຍະການຢ້ຽມຢາມ ສປປ ລາວ ຕາມຄໍາເຊື້ອເຊີນຂອງກະຊວງ, ອົງການ ຫຼື ທ້ອງຖິ່ນ ຂອງ ສປປ ລາວ ອົງການຈັດຕັ້ງທີ່ຮັບຜິດຊອບການຢ້ຽມຢາມນັ້ນ ຕ້ອງສົ່ງໜັງສືສະເໜີ ຕໍ່ຄະນະໂຄສະນາອົບຮົມສູນກາງພັກ ຫຼື ຄະນະກໍາມະການປົກຄອງຂັ້ນແຂວງ ທີ່ກ່ຽວຂ້ອງ ຢ່າງໜ້ອຍ ສອງ ວັນລັດຖະການ ກ່ອນຈັດກອງປະຊຸມຖະແຫຼງຂ່າວ.

ຂັ້ນຕອນການສະເໜີຂໍອະນຸຍາດຈັດກອງປະຊຸມຖະແຫຼງຂ່າວ ໃຫ້ປະຕິບັດຕາມລະບຽບການຂອງຄະນະໂຄສະນາອົບຮົມສູນກາງພັກ.

ຄະນະໂຄສະນາອົບຮົມສູນກາງພັກ ຫຼື ຄະນະກໍາມະການປົກຄອງແຂວງຂັ້ນແຂວງ ທີ່ກ່ຽວຂ້ອງ ສາມາດປະຕິເສດ ຫຼື ໂຈະ ການຈັດກອງປະຊຸມຖະແຫຼງຂ່າວ ຖ້າເຫັນວ່າ ມີສັນຍານຈະການລະເມີດກົດໝາຍຂອງ ສປປ ລາວ.

ສໍາລັບການຈັດກອງປະຊຸມຖະແຫຼງຂ່າວແບບ ຮີບດ່ວນ ຫຼື ສຸກເສີນ, ອົງການຈັດຕັ້ງທີ່ກ່ຽວຂ້ອງຕ້ອງພິຈາລະນາ ເປັນແຕ່ລະກໍລະນີ.

### ມາດຕາ 41 (ປັບປຸງ) ການລົງ ຂ່າວ, ບົດ ແລະ ຄໍາປາໄສ ໃນສື່ມວນຊົນລາວ

ສໍານັກງານຜູ້ຕາງໜ້າ ແລະ ອົງການຈັດຕັ້ງ ຕ່າງປະເທດ ທີ່ມີຈຸດປະສົງລົງ ຂ່າວ, ບົດ ຫຼື ຄໍາປາໄສ ໃນສື່ມວນຊົນລາວ ຕ້ອງຍື່ນໜັງສືສະເໜີ ພ້ອມທັງເນື້ອໃນ ຂ່າວ, ບົດ ຫຼື ຄໍາປາໄສ ຕໍ່ຄະນະໂຄສະນາອົບຮົມສູນກາງພັກ ຢ່າງໜ້ອຍ ສິບ ວັນລັດຖະການ ກ່ອນວັນລົງຂ່າວ. ໜັງສືສະເໜີດັ່ງກ່າວ ຕ້ອງກໍານົດແຈ້ງ ກ່ຽວກັບ ຈຸດປະສົງ, ເນື້ອໃນ, ຊື່ຂອງຜູ້ກ່າວຄໍາປາໄສ ຫຼື ຜູ້ຂຽນບົດ ແລະ ຊື່ຂອງອົງການສື່ມວນຊົນລາວ ທີ່ຈະລົງຂ່າວ. ສໍາລັບສໍານັກງານຜູ້ຕາງໜ້າຕ່າງປະເທດ ຕ້ອງສົ່ງສໍາເນົາໜັງສືສະເໜີ ພ້ອມທັງສໍາເນົາເນື້ອໃນ ຂ່າວ, ບົດ ຫຼື ຄໍາປາໄສ ໃຫ້ກະຊວງການຕ່າງປະເທດ ເພື່ອຊາບ.

ສໍານັກງານຜູ້ຕາງໜ້າ ແລະ ອົງການຈັດຕັ້ງ ຕ່າງປະເທດ ທີ່ມີຈຸດປະສົງລົງ ຂ່າວ, ບົດ ຫຼື ຄໍາປາໄສ ໃນສື່ມວນຊົນລາວ ຢູ່ ທ້ອງຖິ່ນ ຕ້ອງຍື່ນໜັງສືສະເໜີ ພ້ອມທັງເນື້ອໃນ ຂ່າວ, ບົດ ຫຼື ຄໍາປາໄສ ຕໍ່ຄະນະກໍາມະການປົກຄອງຂັ້ນແຂວງທີ່ກ່ຽວຂ້ອງ ຢ່າງໜ້ອຍ ສິບ ວັນລັດຖະການ ກ່ອນວັນລົງຂ່າວ. ໜັງສືສະເໜີດັ່ງກ່າວ ຕ້ອງກໍານົດແຈ້ງກ່ຽວກັບຈຸດປະສົງ, ເນື້ອໃນ, ຊື່ຂອງຜູ້ກ່າວປາໄສ ຫຼື ຜູ້ຂຽນບົດ ແລະ ຊື່ຂອງອົງການສື່ມວນຊົນລາວ ທີ່ຈະລົງຂ່າວ. ສໍາລັບສໍານັກງານຜູ້ຕາງໜ້າຂອງຕ່າງປະເທດ ຕ້ອງສົ່ງສໍາເນົາໜັງສືສະເໜີ ພ້ອມທັງສໍາເນົາເນື້ອໃນ ຂ່າວ, ບົດ ຫຼື ຄໍາປາໄສ ໃຫ້ກະຊວງການຕ່າງປະເທດ ເພື່ອຊາບ.

ຂັ້ນຕອນການສະເໜີຂໍອະນຸຍາດລົງ ຂ່າວ, ບົດ ຫຼື ຄໍາປາໄສ ໃນສື່ມວນຊົນລາວ ໃຫ້ປະຕິບັດຕາມລະບຽບການຂອງຄະນະໂຄສະນາອົບຮົມສູນກາງພັກ.

### ມາດຕາ 42 (ປັບປຸງ) ການວາງສະແດງ ຮູບແຕ້ມ, ຮູບພາບ ແລະ ຂໍ້ມູນ ຂ່າວສານ ຮູບແບບອື່ນ ຢູ່ ນອກເຂດສະຖານທີ່ເຮັດວຽກຂອງສໍານັກງານຜູ້ຕາງໜ້າ ແລະ ອົງການຈັດຕັ້ງ ຕ່າງປະເທດ

ສໍານັກງານຜູ້ຕາງໜ້າ ແລະ ອົງການຈັດຕັ້ງ ຕ່າງປະເທດ ທີ່ມີສໍານັກງານຕັ້ງ ຢູ່ ນະຄອນຫຼວງວຽງຈັນ ຊຶ່ງມີຈຸດປະສົງ ວາງສະແດງ ຮູບແຕ້ມ, ຮູບພາບ ແລະ ຂໍ້ມູນ ຂ່າວສານ ຮູບແບບອື່ນ ຢູ່ ນອກເຂດສະຖານທີ່ເຮັດວຽກຂອງຕົນ ຕ້ອງຍື່ນໜັງສືສະເໜີ ຕໍ່ກະຊວງວັດທະນະທໍາ ແລະ ການທ່ອງທ່ຽວ ຢ່າງໜ້ອຍ ສິບ ວັນລັດຖະການ

ກ່ອນວັນວາງສະແດງ. ສຳລັບສຳນັກງານຜູ້ຕາງໜ້າຕ່າງປະເທດ ຕ້ອງສົ່ງສຳເນົາໜັງສືສະເໜີ ໃຫ້ກະຊວງການຕ່າງປະເທດ ເພື່ອຊາບ.

ສຳນັກງານຜູ້ຕາງໜ້າ ແລະ ອົງການຈັດຕັ້ງ ຕ່າງປະເທດ ທີ່ມີສຳນັກງານຕັ້ງ ຢູ່ ທ້ອງຖິ່ນອື່ນ ຊຶ່ງມີຈຸດປະສົງວາງສະແດງ ຮູບແຕ້ມ, ຮູບພາບ ແລະ ຂໍ້ມູນ ຂ່າວສານ ຮູບແບບອື່ນ ຢູ່ ນອກເຂດສະຖານທີ່ເຮັດວຽກຂອງຕົນ ຕ້ອງຍື່ນໜັງສືສະເໜີ ຕໍ່ຄະນະກຳມະການປົກຂອງຂັ້ນແຂວງ ທີ່ກ່ຽວຂ້ອງ ຢ່າງໜ້ອຍ ສິບ ວັນລັດຖະການ ກ່ອນວັນວາງສະແດງ. ສຳລັບສຳນັກງານຜູ້ຕາງໜ້າຕ່າງປະເທດ ຕ້ອງສົ່ງສຳເນົາໜັງສືສະເໜີ ໃຫ້ກະຊວງການຕ່າງ ປະເທດ ເພື່ອຊາບ.

ຂັ້ນຕອນການສະເໜີຂໍອະນຸຍາດ ວາງສະແດງ ຮູບແຕ້ມ, ຮູບພາບ ແລະ ຂໍ້ມູນ ຂ່າວສານ ຮູບແບບອື່ນ ໃຫ້ປະຕິບັດຕາມລະບຽບການຂອງກະຊວງວັດທະນະທຳ ແລະ ການທ່ອງທ່ຽວ.

ການເຄື່ອນໄຫວຕາມທີ່ໄດ້ກຳນົດໄວ້ໃນມາດຕານີ້ ແລະ ການປ່ຽນແປງທີ່ແຕກຕ່າງຈາກກິດຈະກຳເດີມ ສາມາດດຳເນີນການໄດ້ ກໍຕໍ່ເມື່ອໄດ້ຮັບການເຫັນດີຈາກກະຊວງວັດທະນະທຳ ແລະ ການທ່ອງທ່ຽວ ຫຼື ຄະນະກຳມະການປົກຄອງຂັ້ນແຂວງ ທີ່ກ່ຽວຂ້ອງ.

**ມາດຕາ 43 (ປັບປຸງ) ການຕິດຕັ້ງ ກະດານ, ປ້າຍ ທຸກປະເພດ ທຸກຊະນິດ ຢູ່ ນອກເຂດສະຖານທີ່ເຮັດວຽກຂອງສຳນັກງານຜູ້ຕາງໜ້າ ແລະ ອົງການຈັດຕັ້ງ ຕ່າງປະເທດ ຫຼື ການຈັດງານ ສາຍຮູບເງົາ, ວາງສະແດງ ແລະ ໂຄສະນາ ເຜີຍແຜ່ອື່ນ ໂດຍການເຊື້ອເຊີນພົນລະເມືອງລາວ ເຂົ້າຮ່ວມ**

ສຳນັກງານຜູ້ຕາງໜ້າ ຫຼື ອົງການການຈັດຕັ້ງ ຕ່າງປະເທດ ທີ່ມີຫ້ອງການຕັ້ງ ຢູ່ ນະຄອນຫຼວງວຽງຈັນ ຊຶ່ງມີຈຸດປະສົງຕິດຕັ້ງ ກະດານ, ປ້າຍ ທຸກປະເພດ ທຸກຊະນິດ ຢູ່ ນອກເຂດສະຖານທີ່ເຮັດວຽກຂອງຕົນ ຫຼື ການຈັດງານ ສາຍຮູບເງົາ, ວາງສະແດງ ແລະ ໂຄສະນາເຜີຍແຜ່ອື່ນ ໂດຍການເຊື້ອເຊີນພົນລະເມືອງລາວເຂົ້າຮ່ວມ ຕ້ອງຍື່ນໜັງສືສະເໜີ ຕໍ່ກະຊວງວັດທະນະທຳ ແລະ ການທ່ອງທ່ຽວ. ສຳລັບສຳນັກງານຜູ້ຕາງໜ້າຂອງຕ່າງປະເທດ ຕ້ອງສົ່ງສຳເນົາໜັງສືສະເໜີ ໃຫ້ກະຊວງການຕ່າງປະເທດ ເພື່ອຊາບ.

ໃນກໍລະນີມີຈຸດປະສົງຈັດກິດຈະກຳດັ່ງກ່າວ ຢູ່ ທ້ອງຖິ່ນອື່ນ, ສຳນັກງານຜູ້ຕາງໜ້າຕ່າງປະເທດ ຫຼື ອົງການການຈັດຕັ້ງຕ່າງປະເທດ ຕ້ອງຍື່ນໜັງສືສະເໜີ ຕໍ່ຄະນະກຳມະການປົກຄອງຂັ້ນແຂວງ ທີ່ກ່ຽວຂ້ອງ. ສຳລັບສຳນັກງານຜູ້ຕາງໜ້າຂອງຕ່າງປະເທດ ຕ້ອງສົ່ງສຳເນົາໜັງສືສະເໜີໃຫ້ກະຊວງການຕ່າງປະເທດ ເພື່ອຊາບ.

ຂັ້ນຕອນການສະເໜີຂໍອະນຸຍາດຕິດຕັ້ງ ກະດານ, ປ້າຍ ແລະ ຈໍພາບ; ການຈັດງານ ສາຍຮູບເງົາ, ວາງສະແດງ ແລະ ໂຄສະນາເຜີຍແຜ່ອື່ນ ໃຫ້ປະຕິບັດຕາມລະບຽບການຂອງກະຊວງວັດທະນະທຳ ແລະ ການທ່ອງທ່ຽວ.

ກິດຈະກຳທີ່ໄດ້ກຳນົດໄວ້ໃນມາດຕານີ້ ແລະ ການປ່ຽນແປງຈາກກິດຈະກຳເດີມ ສາມາດດຳເນີນການໄດ້ ກໍຕໍ່ເມື່ອໄດ້ຮັບການເຫັນດີຈາກກະຊວງວັດທະນະທຳ ແລະ ການທ່ອງທ່ຽວ ຫຼື ຄະນະກຳມະການປົກຄອງຂັ້ນແຂວງ ທີ່ກ່ຽວຂ້ອງ.

## ພາກທີ 4
## ສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບຂອງ ສື່ມວນຊົນ, ສຳນັກງານຜູ້ຕາງໜ້າ ແລະ ອົງການຈັດຕັ້ງ ຕ່າງປະເທດ

**ມາດຕາ 44 (ປັບປຸງ) ສິດ ແລະ ໜ້າທີ່ ຂອງສື່ມວນຊົນຕ່າງປະເທດ**

ໃນການເຄື່ອນໄຫວວຽກງານສື່ມວນຊົນ ຢູ່ ສປປ ລາວ ຂອງສື່ມວນຊົນຕ່າງປະເທດ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເຄື່ອນໄຫວວຽກງານສື່ມວນຊົນ ຢູ່ ສປປ ລາວ ຕາມແຜນການທີ່ໄດ້ຮັບອະນຸຍາດ;

2. ສະເໜີ ນໍາເຂົ້າ-ສົ່ງອອກ ວັດຖຸປະກອບອັນຈໍາເປັນສໍາລັບນໍາໃຊ້ເຂົ້າໃນການເຄື່ອນໄຫວວຽກງານສື່ມວນຊົນ;

3. ສະເໜີ ສ້າງຕັ້ງ ຫຼື ຍຸບເລີກ ຫ້ອງການຜູ້ຕາງໜ້າຂອງສື່ມວນຊົນຕ່າງປະເທດ;

4. ສະເໜີ ສັບປ່ຽນ, ເພີ່ມ ແລະ ແຕ່ງຕັ້ງ ນັກຂ່າວຕ່າງປະເທດທີ່ປະຈໍາການ ພ້ອມທັງ ຈັດຈ້າງຜູ້ຊ່ວຍວຽກສື່ມວນຊົນ ແລະ ຜູ້ຮ່ວມງານ ຂອງຫ້ອງການຜູ້ຕາງໜ້າສື່ມວນຊົນຕ່າງປະເທດ;

5. ສະເໜີຂໍວີຊາ, ບັດອະນຸຍາດພັກເຊົາຊົ່ວຄາວ ແລະ ບັດນັກຂ່າວຕ່າງປະເທດ ຕາມກົດໝາຍ ແລະ ລະບຽບການຂອງ ສປປ ລາວ;

6. ສະໜີຈັດຈ້າງ ຜູ້ຊ່ວຍວຽກສື່ມວນຊົນ ແລະ ຜູ້ຮ່ວມງານ ຕາມກົດໝາຍ ແລະ ລະບຽບການຂອງ ສປປ ລາວ;

7. ຕິດຕັ້ງ ແລະ ນໍາໃຊ້ ເຄື່ອງຮັບສົ່ງສັນຍານສຽງ ແລະ ພາບ ຜ່ານດາວທຽມ ແລະ ອຸປະກອນສົ່ງສັນຍານພາບອອກຕ່າງປະເທດ ຜ່ານລະບົບເຄືອຂ່າຍການສື່ສານແຫ່ງຊາດ ຕາມກົດໝາຍຂອງ ສປປ ລາວ;

8. ໄດ້ຮັບນະໂຍບາຍ ແລະ ການອໍານວຍຄວາມສະດວກ ໃນການເຄື່ອນໄຫວວຽກງານສື່ມວນຊົນ ຕາມກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ;

9. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ.

**ມາດຕາ 45 (ປັບປຸງ) ສິດ ແລະ ໜ້າທີ່ ຂອງສໍານັກງານຜູ້ຕາງໜ້າ ແລະ ອົງການຈັດຕັ້ງ ຕ່າງປະເທດ**

ໃນການເຄື່ອນໄຫວວຽກງານສື່ມວນຊົນ ຢູ່ ສປປ ລາວ ຂອງສໍານັກງານຜູ້ຕາງໜ້າ ແລະ ອົງການຈັດຕັ້ງຕ່າງປະເທດ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເຄື່ອນໄຫວວຽກງານສື່ມວນຊົນ ຢູ່ ສປປ ລາວ ພາຍຫຼັງໄດ້ຮັບການອະນຸຍາດຈາກພາກສ່ວນທີ່ກ່ຽວຂ້ອງ ຕາມກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ;

2. ໄດ້ຮັບນະໂຍບາຍ ແລະ ການອໍານວຍຄວາມສະດວກ ໃນການເຄື່ອນໄຫວວຽກງານສື່ມວນຊົນ ຕາມກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ;

3. ໄດ້ຮັບອະພິສິດ ແລະ ເອກະສິດ ຕາມກົດໝາຍສາກົນ ສໍາລັບສໍານັກງານຜູ້ຕາງໜ້າຕ່າງປະເທດ;

4. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ.

**ມາດຕາ 46 (ປັບປຸງ) ຄວາມຮັບຜິດຊອບ ຂອງສື່ມວນຊົນ, ສໍານັກງານຜູ້ຕາງໜ້າ ແລະ ອົງການຈັດຕັ້ງ ຕ່າງປະເທດ**

ສື່ມວນຊົນ, ສໍານັກງານຜູ້ຕາງໜ້າ ແລະ ອົງການຈັດຕັ້ງ ຕ່າງປະເທດ ມີ ຄວາມຮັບຜິດຊອບ ດັ່ງນີ້:

1. ເຄົາລົບ ແລະ ປະຕິບັດ ລັດຖະທຳມະນູນ, ກົດໝາຍ, ລະບຽບການ, ຮີດຄອງປະເພນີອັນດີງາມ ຂອງຊາດລາວ ລວມທັງ ກົດໝາຍສາກົນ, ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນ ທີ່ກ່ຽວຂ້ອງ;

2. ເຄື່ອນໄຫວວຽກງານສື່ມວນຊົນ ຢ່າງຖືກຕ້ອງຕາມທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້ ໂດຍສອດຄ່ອງກັບກົດໝາຍທີ່ກ່ຽວຂ້ອງ ຂອງ ສປປ ລາວ;

3. ເສຍອາກອນລາຍໄດ້ ຕາມກົດໝາຍຂອງ ສປປ ລາວ ສຳລັບນັກຂ່າວຕ່າງປະເທດທີ່ປະຈຳການ ແລະ ຜູ້ຊ່ວຍວຽກສື່ມວນຊົນ;

4. ສົ່ງເສີມ ການແລກປ່ຽນ ແລະ ເຜີຍແຜ່ ຂໍ້ມູນ ຂ່າວສານ ລະຫວ່າງ ສປປ ລາວ ແລະ ຕ່າງປະເທດ ຢ່າງສ້າງສັນ ແລະ ນັບມື້ນັບກວ້າງຂວາງ;

5. ເຄື່ອນໄຫວວຽກງານສື່ມວນຊົນ ບົນພື້ນຖານ ຖືກຕ້ອງຕາມຄວາມເປັນຈິງ ແລະ ມີຄວາມທ່ຽງທຳ;

6. ມີຄວາມຮັບຜິດຊອບອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ.

## ພາກທີ 5
## ງົບປະມານ ແລະ ຄ່າໃຊ້ຈ່າຍ

### ມາດຕາ 47 (ໃໝ່) ງົບປະມານ

ລັດຖະບານ ຈັດສັນງົບປະມານເຂົ້າໃນວຽກງານການຄຸ້ມຄອງການເຄື່ອນໄຫວວຽກງານສື່ມວນຊົນ ຢູ່ ສປປ ລາວ ຂອງສື່ມວນຊົນ, ສຳນັກງານຜູ້ຕາງໜ້າ ແລະ ອົງການຈັດຕັ້ງ ຕ່າງປະເທດ.

### ມາດຕາ 48 (ໃໝ່) ຄ່າໃຊ້ຈ່າຍ

ຄ່າໃຊ້ຈ່າຍ ໃນການເຄື່ອນໄຫວວຽກງານສື່ມວນຊົນ ຢູ່ ສປປ ລາວ ຂອງສື່ມວນຊົນ, ສຳນັກງານຜູ້ຕາງໜ້າ ແລະ ອົງການຈັດຕັ້ງ ຕ່າງປະເທດ ໃຫ້ປະຕິບັດຕາມກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ.

## ພາກທີ 6
## ຂໍ້ຫ້າມ

**ມາດຕາ 49 (ໃໝ່) ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີ ພຶດຕິກຳ ດັ່ງນີ້:

1. ເຄື່ອນໄຫວ ວຽກງານສື່ມວນຊົນ ຢູ່ ສປປ ລາວ ໂດຍບໍ່ໄດ້ຮັບອະນຸຍາດ;
2. ສ້າງອຸປະສັກຂັດຂວາງ, ໃຊ້ຄວາມຮຸນແຮງ, ບັງຄັບນາບຂູ່, ໝິ່ນປະໝາດການເຄື່ອນໄຫວຂອງນັກຂ່າວຕ່າງປະເທດ ແລະ ການປະຕິບັດໜ້າທີ່ຂອງເຈົ້າໜ້າທີ່ທີ່ກ່ຽວຂ້ອງ;
3. ໃຫ້, ເປັນສື່ກາງໃນການ ໃຫ້ ແລະ ຮັບສິນບົນ ແກ່ພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;
4. ໂຄສະນາ ເຜີຍແຜ່ ຂໍ້ມູນທີ່ບໍ່ມີຄວາມຈິງ ກ່ຽວກັບ ການເຄື່ອນໄຫວວຽກງານສື່ມວນຊົນ ຂອງສື່ມວນຊົນ, ສຳນັກງານຜູ້ຕາງໜ້າ ແລະ ອົງການຈັດຕັ້ງ ຕ່າງປະເທດ;
5. ປອມແປງເອກະສານ, ນຳໃຊ້ເອກະສານປອມ ຫຼື ໃຫ້ຂໍ້ມູນທີ່ບໍ່ຖືກຕ້ອງ;
6. ມີພຶດຕິກຳອື່ນ ທີ່ເປັນການລະເມີດ ກົດໝາຍ ແລະ ລະບຽບການ.

**ມາດຕາ 50 (ໃໝ່) ຂໍ້ຫ້າມ ສຳລັບ ນັກຂ່າວ, ສື່ມວນຊົນ, ສຳນັກງານຜູ້ຕາງໜ້າ ແລະ ອົງການຈັດຕັ້ງ ຕ່າງປະເທດ**

ຫ້າມ ນັກຂ່າວ, ສື່ມວນຊົນ, ສຳນັກງານຜູ້ຕາງໜ້າ ແລະ ອົງການຈັດຕັ້ງ ຕ່າງປະເທດ ມີ ພຶດຕິກຳ ດັ່ງນີ້:

1. ເຄື່ອນໄຫວວຽກງານສື່ມວນຊົນ ຢູ່ ສປປ ລາວ ໂດຍບໍ່ໄດ້ຮັບອະນຸຍາດຈາກພາກສ່ວນກ່ຽວຂ້ອງ ຕາມທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

2. ລະເມີດ ກົດໝາຍ ແລະ ລະບຽບການ ກ່ຽວກັບ ວຽກງານປ້ອງກັນຄວາມສະຫງົບ, ຄວາມປອດໄພ, ອຳນາດອະທິປະໄຕ ແລະ ຄວາມໝັ້ນຄົງ ຂອງຊາດ;

3. ແບ່ງແຍກຄວາມສາມັກຄີ, ສ້າງຄວາມອາຄາດບາດໝາງ ລະຫວ່າງ ປະຊາຊົນລາວບັນດາເຜົ່າ, ສາສະໜາ, ສາຍພົວພັນມິດຕະພາບ ແລະ ຄວາມສາມັກຄີ ລະຫວ່າງ ປະເທດ;

4. ສົ່ງເສີມການໃຊ້ຄວາມຮຸນແຮງ, ໂຄສະນາຮັບໃຊ້ສິ່ງລາມົກອານາຈານທຸກປະເພດ ແລະ ນຳໃຊ້ສື່ມວນຊົນ ສປປ ລາວ ເພື່ອໂຈມຕີປະເທດອື່ນ;

5. ອອກຂ່າວບິດເບືອນຄວາມຈິງ, ແຕະຕ້ອງເຖິງກຽດສັກສີຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ;

6. ມີພຶດຕິກຳອື່ນ ທີ່ເປັນການລະເມີດ ກົດໝາຍ ແລະ ລະບຽບການ.

**ມາດຕາ 51 (ໃໝ່) ຂໍ້ຫ້າມ ສຳລັບ ພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ**

ຫ້າມ ພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ມີ ພຶດຕິກຳ ດັ່ງນີ້:

1. ສວຍໃຊ້ ສິດ ແລະ ໜ້າທີ່ ເພື່ອຜົນປະໂຫຍດ ສ່ວນຕົວ, ຄອບຄົວ, ຍາດພີ່ນ້ອງ ແລະ ພັກພວກຂອງຕົນ;

2. ເມີນເສີຍ, ປະໝາດ, ເລີ່ນເລີ້ ຫຼື ຂາດຄວາມຮັບຜິດຊອບ ໃນການປະຕິບັດໜ້າທີ່;

3. ຮັບ, ໃຫ້, ເປັນສື່ກາງໃນການ ຮັບ ຫຼື ໃຫ້ ສິນບົນ;

4. ປະຕິບັດໜ້າທີ່ຕໍ່ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ໂດຍບໍ່ຍຸຕິທຳ, ລຳອຽງ, ບໍ່ຖືກຕ້ອງ;

5. ຂັດຂວາງການຜະລິດ ແລະ ການເຜີຍແຜ່ຜະລິດຕະພັນສື່ມວນຊົນທຸກປະເພດທີ່ຖືກຕ້ອງ ຕາມກົດໝາຍ ແລະ ລະບຽບການ;

6. ກົດໜ່ວງ, ຖ່ວງດຶງ, ປອມແປງເອກະສານ ແລະ ແກ່ຍາວຂັ້ນຕອນການພິຈາລະນາການຂໍອະນຸຍາດ;

7. ຮຽກເກັບ ຄ່າທຳນຽມ ຫຼື ຄ່າບໍລິການ ໂດຍບໍ່ຖືກຕ້ອງ ຕາມກົດໝາຍ;

8. ມີພຶດຕິກຳອື່ນ ທີ່ເປັນການລະເມີດ ກົດໝາຍ ແລະ ລະບຽບການ.

## ພາກທີ 7
## ການ ຄຸ້ມຄອງ ແລະ ກວດກາ ການເຄື່ອນໄຫວວຽກງານສື່ມວນຊົນ ຢູ່ ສປປ ລາວ ຂອງສື່ມວນຊົນ, ສຳນັກງານຜູ້ຕາງໜ້າ ແລະ ອົງການຈັດຕັ້ງ ຕ່າງປະເທດ

### ມາດຕາ 52 (ໃໝ່) ອົງການຄຸ້ມຄອງ ແລະ ກວດກາ

ກະຊວງການຕ່າງປະເທດ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການ ປະສານສົມທົບກັບ ຄະນະໂຄສະນາອົບຮົມສູນກາງພັກ, ກະຊວງວັດທະນະທຳ ແລະ ການທ່ອງທ່ຽວ, ກະຊວງ, ອົງການ, ຄະນະກຳມະການປົກຄອງຂັ້ນແຂວງ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ ໃນການຄຸ້ມຄອງ ແລະ ກວດກາ ການເຄື່ອນໄຫວວຽກງານສື່ມວນຊົນ ຢູ່ ສປປ ລາວ ຂອງສື່ມວນຊົນ, ສຳນັກງານຜູ້ຕາງໜ້າ ແລະ ອົງການຈັດຕັ້ງ ຕ່າງປະເທດ.

ອົງການຄຸ້ມຄອງ ແລະ ກວດກາ ການເຄື່ອນໄຫວວຽກງານສື່ມວນຊົນ ຢູ່ ສປປ ລາວ ຂອງສື່ມວນຊົນ, ສຳນັກງານຜູ້ຕາງໜ້າ ແລະ ອົງການຈັດຕັ້ງ ຕ່າງປະເທດ ປະກອບດ້ວຍ:

1. ກະຊວງການຕ່າງປະເທດ;
2. ຄະນະໂຄສະນາອົບຮົມສູນກາງພັກ;
3. ກະຊວງວັດທະນະທຳ ແລະ ການທ່ອງທ່ຽວ;
4. ຄະນະກຳມະການປົກຄອງຂັ້ນແຂວງ.

### ມາດຕາ 53 (ປັບປຸງ) ສິດ ແລະ ໜ້າທີ່ຂອງກະຊວງການຕ່າງປະເທດ

ກະຊວງການຕ່າງປະເທດ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ສ້າງ ນະໂຍບາຍ, ແຜນຍຸດທະສາດ, ນິຕິກຳ ກ່ຽວກັບວຽກງານການເຄື່ອນໄຫວວຽກງານສື່ມວນຊົນ ຢູ່ ສປປ ລາວ ຂອງສື່ມວນຊົນ, ສຳນັກງານຜູ້ຕາງໜ້າ ແລະ ອົງການຈັດຕັ້ງ ຕ່າງປະເທດ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ເພື່ອສະເໜີລັດຖະບານ ພິຈາລະນາ;

2. ຜັນຂະຫຍາຍ ນະໂຍບາຍ, ແຜນຍຸດທະສາດ, ນິຕິກຳ ກ່ຽວກັບວຽກງານການເຄື່ອນໄຫວວຽກງານສື່ມວນຊົນ ຢູ່ ສປປ ລາວ ຂອງສື່ມວນຊົນ, ສຳນັກງານຜູ້ຕາງໜ້າ ແລະ ອົງການຈັດຕັ້ງ ຕ່າງປະເທດ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ເປັນ ແຜນການ, ແຜນງານ, ໂຄງການ, ກິດຈະກຳລະອຽດ ແລະ ຈັດຕັ້ງປະຕິບັດ;

3. ໂຄສະນາ ເຜີຍແຜ່ ນະໂຍບາຍ, ແຜນຍຸດທະສາດ, ນິຕິກຳ, ແຜນການ, ແຜນງານ, ໂຄງການ, ກິດຈະກຳ ກ່ຽວກັບ ການເຄື່ອນໄຫວວຽກງານສື່ມວນຊົນ ຢູ່ ສປປ ລາວ ຂອງສື່ມວນຊົນ, ສຳນັກງານຜູ້ຕາງໜ້າ ແລະ ອົງການຈັດຕັ້ງ ຕ່າງປະເທດ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ໃຫ້ກວ້າງຂວາງ ແລະ ທົ່ວເຖິງ;

4. ຮັບ ແລະ ພິຈາລະນາ ສຳນວນເອກະສານສະເໜີ ກ່ຽວກັບ ການເຄື່ອນໄຫວວຽກງານສື່ມວນຊົນ ຢູ່ ສປປ ລາວ ຂອງຫ້ອງການຜູ້ຕາງໜ້າສື່ມວນຊົນຕ່າງປະເທດ;

5. ເປັນເຈົ້າການ ຄຸ້ມຄອງ ແລະ ອຳນວຍຄວາມສະດວກ ໃຫ້ແກ່ການສຳພາດການນຳຂັ້ນສູງຂອງພັກ-ລັດ ຂອງ ນັກຂ່າວຕ່າງປະເທດທີ່ປະຈຳການ ແລະ ທີ່ບໍ່ປະຈຳການ;

6. ອອກໜັງສືອະນຸຍາດໃຫ້ນັກຂ່າວຕ່າງປະເທດ ເຄື່ອນໄຫວ ວຽກງານສື່ມວນຊົນ ຢູ່ ສປປ ລາວ;

7. ອອກໜັງສືອະນຸຍາດໃຫ້ສື່ມວນຊົນຕ່າງປະເທດ ສ້າງຕັ້ງຫ້ອງການຜູ້ຕາງໜ້າຂອງຕົນ ແລະ ແຕ່ງຕັ້ງນັກຂ່າວ ລວມທັງ ການຈັດຈ້າງ ຜູ້ຊ່ວຍວຽກສື່ມວນຊົນ ແລະ ຜູ້ຮ່ວມງານ;

8. ເປັນເຈົ້າການປະສານສົມທົບກັບ ກະຊວງ, ອົງການ ແລະ ຄະນະກຳມະການປົກຄອງຂັ້ນແຂວງ ໃນການອຳນວຍຄວາມສະດວກໃຫ້ແກ່ການເຄື່ອນໄຫວວຽກງານສື່ມວນຊົນ ຢູ່ ສປປ ລາວ ຂອງສື່ມວນຊົນຕ່າງປະເທດ;

9. ອອກວີຊາ ເຂົ້າ-ອອກ ສປປ ລາວ ໃຫ້ແກ່ນັກຂ່າວຕ່າງປະເທດ ຕາມກົດໝາຍ ແລະ ລະບຽບການ;

10. ນຳໃຊ້ມາດຕະການ ຕໍ່ຫ້ອງການຜູ້ຕາງໜ້າສື່ມວນຊົນຕ່າງປະເທດ, ນັກຂ່າວຕ່າງປະເທດ, ຜູ້ຊ່ວຍວຽກສື່ມວນຊົນຕ່າງປະເທດ ແລະ ຜູ້ຮ່ວມງານ ທີ່ລະເມີດດຳລັດສະບັບນີ້;

11. ໂຈະ ແລະ ຍົກເລີກ ການເຄື່ອນໄຫວຂອງຫ້ອງການຜູ້ຕາງໜ້າສື່ມວນຊົນຕ່າງປະເທດ ແລະ ນັກຂ່າວຕ່າງປະເທດທີ່ບໍ່ປະຈຳການ;

12. ຮ່ວມມືກັບສາກົນ ກ່ຽວກັບ ການເຄື່ອນໄຫວວຽກງານສື່ມວນຊົນ ຂອງສື່ມວນຊົນຕ່າງປະເທດ ຢູ່ ສປປ ລາວ;

13. ສະຫຼຸບ ແລະ ລາຍງານ ປະຈຳປີ ກ່ຽວກັບ ການເຄື່ອນໄຫວວຽກງານສື່ມວນຊົນ ຢູ່ ສປປ ລາວ ຂອງສື່ມວນຊົນຕ່າງປະເທດ ຕໍ່ລັດຖະບານ;

14. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 54 (ໃໝ່) ສິດ ແລະ ໜ້າທີ່ຂອງຄະນະໂຄສະນາອົບຮົມສູນກາງພັກ**

ຄະນະໂຄສະນະອົບຮົມສູນກາງພັກ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ສ້າງ ນະໂຍບາຍ, ແຜນຍຸດທະສາດ, ນິຕິກຳ ກ່ຽວກັບການເຄື່ອນໄຫວວຽກງານສື່ມວນຊົນ ຢູ່ ສປປ ລາວ ຂອງສຳນັກງານຜູ້ຕາງໜ້າ ແລະ ອົງການຈັດຕັ້ງ ຕ່າງປະເທດ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ເພື່ອສະເໜີຕໍ່ ລັດຖະບານ ພິຈາລະນາ;

2. ຈັດຕັ້ງ ຜັນຂະຫຍາຍ ນະໂຍບາຍ, ແຜນຍຸດທະສາດ, ນິຕິກຳ ກ່ຽວກັບການເຄື່ອນໄຫວວຽກງານສື່ມວນຊົນ ຢູ່ ສປປ ລາວ ຂອງສຳນັກງານຜູ້ຕາງໜ້າ ແລະ ອົງການຈັດຕັ້ງ ຕ່າງປະເທດ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ເປັນ ແຜນການ, ແຜນງານ, ໂຄງການ, ກິດຈະກຳລະອຽດ ແລະ ຈັດຕັ້ງປະຕິບັດ;

3. ໂຄສະນາ ເຜີຍແຜ່ ນະໂຍບາຍ, ແຜນຍຸດທະສາດ, ນິຕິກຳ, ແຜນການ, ແຜນງານ, ໂຄງການ, ກິດຈະກຳ ກ່ຽວກັບການເຄື່ອນໄຫວວຽກງານສື່ມວນຊົນ ຢູ່ ສປປ ລາວ ຂອງສຳນັກງານຜູ້ຕາງໜ້າ ແລະ ອົງການຈັດຕັ້ງ ຕ່າງປະເທດ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ໃຫ້ກວ້າງຂວາງ ແລະ ທົ່ວເຖິງ;

4. ຮັບ ແລະ ພິຈາລະນາ ສຳນວນເອກະສານສະເໜີຂໍອະນຸຍາດເຄື່ອນໄຫວວຽກງານສື່ມວນຊົນ ຢູ່ ສປປ ລາວ ຂອງສຳນັກງານຜູ້ຕາງໜ້າ ແລະ ອົງການຈັດຕັ້ງຕ່າງປະເທດ ;

5. ອອກໜັງສືອະນຸຍາດ ໃຫ້ແກ່ການເຄື່ອນໄຫວວຽກງານສື່ມວນຊົນ ຢູ່ ສປປ ລາວ ຂອງສຳນັກງານຜູ້ຕາງໜ້າ ແລະ ອົງການຈັດຕັ້ງຕ່າງປະເທດ ເປັນຕົ້ນ ການ ຈັດກອງປະຊຸມຖະແຫຼງຂ່າວສາກົນ, ເຜີຍແຜ່ ຂໍ້ມູນຂ່າວສານ, ບົດ, ຄຳປາໄສ ລົງໃນສື່ມວນຊົນຂອງລາວ.

6. ແນະນຳ ການຈັດຕັ້ງປະຕິບັດລະບຽບການ ກ່ຽວກັບ ການເຄື່ອນໄຫວວຽກງານສື່ມວນຊົນ ຢູ່ ສປປ ລາວ ຂອງສຳນັກງານຜູ້ຕາງໜ້າ ແລະ ອົງການຈັດຕັ້ງຕ່າງປະເທດ ຢູ່ ສປປ ລາວ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;

7. ສະຫຼຸບ ແລະ ລາຍງານ ປະຈຳປີ ກ່ຽວກັບ ການເຄື່ອນໄຫວວຽກງານສື່ມວນຊົນ ຂອງສຳນັກງານຜູ້ຕາງໜ້າ ແລະ ອົງການຈັດຕັ້ງຕ່າງປະເທດ ຢູ່ ສປປ ລາວ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ຕໍ່ລັດຖະບານ;

8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 55 (ປັບປຸງ) ສິດ ແລະ ໜ້າທີ່ຂອງກະຊວງວັດທະນະທຳ ແລະ ການທ່ອງທ່ຽວ**

ກະຊວງວັດທະນະທຳ ແລະ ການທ່ອງທ່ຽວ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຮັບ ແລະ ພິຈາລະນາ ສຳນວນເອກະສານສະເໜີ ກ່ຽວກັບ ການເຄື່ອນໄຫວວຽກງານສື່ມວນຊົນ ຢູ່ ສປປ ລາວ ຂອງສຳນັກງານຜູ້ຕາງໜ້າ ແລະ ອົງການຈັດຕັ້ງ ຕ່າງປະເທດ ;

2. ອະນຸຍາດການສະເໜີການຈັດພິມ ແລະ ຈຳໜ່າຍ, ວາງສະແດງ ຮູບແຕ້ມ, ຮູບພາບ ແລະ ຂໍ້ມູນຂ່າວສານຮູບແບບອື່ນຂອງສຳນັກງານຜູ້ຕາງໜ້າ ແລະ ອົງການຈັດຕັ້ງຕ່າງປະເທດ ຢູ່ ນອກເຂດສະຖານທີ່ເຮັດວຽກຂອງສຳນັກງານ ແລະ ອົງການຈັດຕັ້ງດັ່ງກ່າວ ຢູ່ ນະຄອນຫຼວງວຽງຈັນ;

3. ອະນຸຍາດການສະເໜີຕິດຕັ້ງ ກະດານ, ປ້າຍທຸກປະເພດ ທຸກຊະນິດ ຂອງສຳນັກງານຜູ້ຕາງໜ້າ ແລະ ອົງການຈັດຕັ້ງ ຕ່າງປະເທດ ຢູ່ ນອກສະຖານທີ່ເຮັດວຽກຂອງສຳນັກງານ ແລະ ອົງການດັ່ງກ່າວ;

4. ອະນຸຍາດການສະເໜີ ສາຍຮູບເງົາ, ຈັດງານວາງສະແດງ ແລະ ໂຄສະນາ ເຜີຍແຜ່ ຢູ່ ນະຄອນຫຼວງວຽງຈັນ ຂອງສຳນັກງານຜູ້ຕາງໜ້າ ແລະ ອົງການຈັດຕັ້ງ ຕ່າງປະເທດ ໂດຍມີການເຂົ້າຮ່ວມຂອງພົນລະເມືອງລາວ;

5. ແນະນຳການຈັດຕັ້ງປະຕິບັດລະບຽບການ ກ່ຽວກັບ ການເຄື່ອນໄຫວວຽກງານສື່ມວນຊົນ ຢູ່ ສປປ ລາວ ຂອງສຳນັກງານຜູ້ຕາງໜ້າ ແລະ ອົງການຈັດຕັ້ງຕ່າງປະເທດ;

6. ສະຫຼຸບ ແລະ ລາຍງານ ປະຈຳປີ ກ່ຽວກັບ ການເຄື່ອນໄຫວວຽກງານສື່ມວນຊົນ ຢູ່ ສປປ ລາວ ຂອງສຳນັກງານຜູ້ຕາງໜ້າ ແລະ ອົງການຈັດຕັ້ງຕ່າງປະເທດ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ຕໍ່ລັດຖະບານ;

7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການ.

**ມາດຕາ 56 (ປັບປຸງ) ສິດ ແລະ ໜ້າທີ່ຂອງຄະນະກຳມະການປົກຄອງຂັ້ນແຂວງ**

ຄະນະກຳມະການປົກຄອງຂັ້ນແຂວງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຮັບ, ພິຈາລະນາ ແລະ ແກ້ໄຂ ບັນຫາທີ່ກ່ຽວຂ້ອງກັບການເຄື່ອນໄຫວວຽກງານສື່ມວນຊົນ ຢູ່ ສປປ ລາວ ຂອງ ນັກຂ່າວຕ່າງປະເທດທີ່ປະຈຳການ, ສຳນັກງານຜູ້ຕາງໜ້າ ແລະ ອົງການຈັດຕັ້ງຕ່າງປະເທດ ໃນຂອບເຂດທ້ອງຖິ່ນຂອງຕົນ;

2. ປະສານສົມທົບ ກັບ ກະຊວງການຕ່າງປະເທດ, ຄະນະໂຄສະນາອົບຮົມສູນກາງພັກ, ກະຊວງວັດທະນະທຳ ແລະ ການທ່ອງທ່ຽວ ໃນການຄຸ້ມຄອງ ແລະ ແກ້ໄຂ ການລະເມີດລະບຽບການ ກ່ຽວກັບການເຄື່ອນໄຫວຂອງສື່ມວນຊົນ, ສຳນັກງານຜູ້ຕາງໜ້າ ແລະ ອົງການຈັດຕັ້ງ ຕ່າງປະເທດ ໃນຂອບເຂດທ້ອງຖິ່ນຂອງຕົນ;

3. ປະສານສົມທົບກັບ ກະຊວງການຕ່າງປະເທດ ມີຄຳເຫັນຕໍ່ການສະເໜີມາເຄື່ອນໄຫວວຽກງານສື່ມວນຊົນ ຂອງສື່ມວນຊົນຕ່າງປະເທດ ຢູ່ທ້ອງຖິ່ນຂອງຕົນ;

4. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 57 (ປັບປຸງ) ສິດ ແລະ ໜ້າທີ່ ຂອງ ກະຊວງ, ອົງການ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ**

ໃນການ ຄຸ້ມຄອງ ແລະ ກວດກາ ການເຄື່ອນໄຫວວຽກງານສື່ມວນຊົນ ຢູ່ ສປປ ລາວ ຂອງສື່ມວນຊົນ, ສຳນັກງານຜູ້ຕາງໜ້າ ແລະ ອົງການຈັດຕັ້ງ ຕ່າງປະເທດ ກະຊວງ, ອົງການ ແລະ ພາກສ່ວນທີ່ກ່ຽວຂ້ອງ ມີສິດ ແລະ ໜ້າທີ່ ປະສານສົມທົບ ແລະ ໃຫ້ການຮ່ວມມືກັບກະຊວງການຕ່າງປະເທດ, ຄະນະໂຄສະນາອົບຮົມສູນກາງພັກ, ກະຊວງວັດທະນະທຳ ແລະ ການທ່ອງທ່ຽວ ຕາມພາລະບົດບາດ ແລະ ຂອບເຂດຄວາມຮັບຜິດຊອບຂອງຕົນ.

**ມາດຕາ 58 (ໃໝ່) ເນື້ອໃນການກວດກາ**

ການກວດກາ ການເຄື່ອນໄຫວວຽກງານສື່ມວນຊົນ ຢູ່ ສປປ ລາວ ຂອງ ສື່ມວນຊົນ, ສຳນັກງານຜູ້ຕາງໜ້າ ແລະ ອົງການຈັດຕັ້ງ ຕ່າງປະເທດ ມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ການປະຕິບັດກົດໝາຍ ແລະ ລະບຽບການ ກ່ຽວກັບ ການເຄື່ອນໄຫວວຽກງານສື່ມວນຊົນ ຂອງສື່ມວນຊົນ, ສຳນັກງານຜູ້ຕາງໜ້າ ແລະ ອົງການຈັດຕັ້ງ ຕ່າງປະເທດ ຢູ່ ສປປ ລາວ;

2. ການນຳໃຊ້ສິດ ແລະ ປະຕິບັດໜ້າທີ່ຂອງພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;

3. ການເຄື່ອນໄຫວ ວຽກງານສື່ມວນຊົນ ຢູ່ ສປປ ລາວ ຂອງສື່ມວນຊົນ, ສໍານັກງານຜູ້ຕາງໜ້າ ແລະ ອົງການຈັດຕັ້ງ ຕ່າງປະເທດ;

4. ເນື້ອໃນອື່ນ ທີ່ເຫັນວ່າມີຄວາມສໍາຄັນ ແລະ ຈໍາເປັນ.

**ມາດຕາ 59 (ໃໝ່) ຮູບການການກວດກາ**

ການກວດກາ ການເຄື່ອນໄຫວວຽກງານສື່ມວນຊົນ ຢູ່ ສປປ ລາວ ຂອງສື່ມວນຊົນ, ສໍານັກງານຜູ້ຕາງໜ້າ ແລະ ອົງການຈັດຕັ້ງ ຕ່າງປະເທດ ມີຮູບການ ດັ່ງນີ້:

1. ການກວດກາຢ່າງເປັນປົກກະຕິ ຊຶ່ງແມ່ນ ການກວດກາທີ່ດໍາເນີນໄປ ຕາມແຜນການ ຢ່າງເປັນປະຈໍາ ແລະ ມີກໍານົດເວລາທີ່ແນ່ນອນ;

2. ການກວດກາ ໂດຍແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນ ການກວດການອກແຜນການ ເມື່ອເຫັນວ່າມີຄວາມຈໍາເປັນ ໂດຍແຈ້ງໃຫ້ເປົ້າໝາຍຖືກກວດກາ ຮູ້ກ່ອນລ່ວງໜ້າ;

3. ການກວດກາແບບກະທັນຫັນ ຊຶ່ງແມ່ນ ການກວດກາແບບຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ເປົ້າໝາຍຖືກກວດກາ ຮູ້ກ່ອນລ່ວງໜ້າ.

ໃນການດໍາເນີນການກວດກາ ການເຄື່ອນໄຫວວຽກງານສື່ມວນຊົນ ຢູ່ ສປປ ລາວ ຂອງສື່ມວນຊົນ, ສໍານັກງານຜູ້ຕາງໜ້າ ແລະ ອົງການຈັດຕັ້ງ ຕ່າງປະເທດ ໃຫ້ປະຕິບັດ ຕາມກົດໝາຍ ຢ່າງເຂັ້ມງວດ.

## ພາກທີ 8
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 60 (ໃໝ່) ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດດໍາລັດສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 61 (ໃໝ່) ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດດໍາລັດສະບັບນີ້ ເປັນຕົ້ນ ຈະຖືກປະຕິບັດມາດຕະການສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ທີ່ຕົນໄດ້ກໍ່ຂຶ້ນ ຫຼື ຖືກລົງໂທດທາງອາຍາ ຕາມກົດໝາຍ.

## ພາກທີ 9
## ບົດບັນຍັດສຸດທ້າຍ

**ມາດຕາ 62 (ປັບປຸງ) ການຈັດຕັ້ງປະຕິບັດ**

ກະຊວງການຕ່າງປະເທດ ເປັນເຈົ້າການປະສານສົມທົບ ກັບ ຄະນະໂຄສະນາອົບຮົມສູນກາງພັກ, ກະຊວງວັດທະນະທຳ ແລະ ການທ່ອງທ່ຽວ ແລະ ຄະນະກຳມະການປົກຄອງຂັ້ນແຂວງ ໃນການຈັດຕັ້ງປະຕິບັດດຳລັດສະບັບນີ້.

ກະຊວງ, ອົງການ, ຄະນະກຳມະການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ປະຕິບັດດຳລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 63 (ປັບປຸງ) ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ .... .......................................2026 ເປັນຕົ້ນໄປ.

ດຳລັດສະບັບນີ້ ປ່ຽນແທນດຳລັດ ວ່າດ້ວຍການເຄື່ອນໄຫວດ້ານການຂ່າວຂອງ ອົງການສື່ມວນຊົນຕ່າງປະເທດ, ສຳນັກງານການທູດຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ຢູ່ ສປປ ລາວ ສະບັບເລກທີ 377/ລບ, ລົງວັນທີ 24 ພະຈິກ 2015.

**ຕາງໜ້າ ລັດຖະບານ ແຫ່ງ ສປປ ລາວ**
**ນາຍົກລັດຖະມົນຕີ**